*Journal of Science and teacher Education (JLSTE), 1*(1), 214 - 223

# ສຶກສາສະມັດຖະພາບການສອນຂອງນັກສຶກສາ ສາຂາຄູພູມສາດທີ່ເຝິກຫັດການສອນ ຢູ່ໂຮງຮຽນມັດທະຍົມຕົ້ນສາທິດ ສົກຮຽນ 2023-2024

*ຊອ. ປທ. ວິລະວອນ ໄຊປັນຍາ**

*ພາກວິຊາຄູພູມສາດ-ປະຫວັດສາດ ວິທະຍາໄລຄູປາກເຊ*

## ບົດຄັດຫຍໍ້

ການວິໄຈໃນຄັ້ງນີ້ເປັນການວິໄຈກ່ຽວກັບການສຶກສາສະມັດຖະພາບການສອນຂອງນັກສຶກສາ ສາຂາຄູພູມສາດທີ່ເຝິກຫັດການສອນ ຢູ່ໂຮງຮຽນມັດທະຍົມຕົ້ນສາທິດ ສົກຮຽນ 2023-2024. ປະຊາກອນທີ່ໃຊ້ໃນການວິໄຈຄັ້ງນີ້ໄດ້ແກ່ ຜູ້ບໍລິຫານ, ຄູສອນ ແລະ ນັກຮຽນມັດທະຍົມຕອນຕົ້ນສາທິດ ຈໍານວນທັງໝົດ 140 ຄົນ, ຍິງ 69 ຄົນ. ກຸ່ມຕົວຢ່າງທີ່ໃຊ້ໃນການວິໄຈຄັ້ງນີ້ໄດ້ແກ່ ຜູ້ບໍລິຫານ, ຄູສອນ ແລະ ນັກຮຽນມັດທະຍົມຕອນຕົ້ນສາທິດລວມທັງໝົດ 103 ຄົນ, ຍິງ 65 ຄົນ, ຊາຍ 38 ຄົນ. ເຄື່ອງມືທີ່ໃຊ້ໃນການວິໄຈຄັ້ງນີ້ຜູ້ວິໄຈໄດ້ນໍາໃຊ້ແບບສອບຖາມ. ສະຖິຕິທີ່ໃຊ້ໃນການວິເຄາະໄດ້ແກ່ ເປີເຊັນ, ຄ່າສະເລ່ຍ ແລະ ຄ່າບ່ຽງເບນມາດຖານ. ຜົນການວິໄຈກ່ຽວກັບສະມັດຖະພາບການສອນຂອງນັກສຶກສາ ສາຂາຄູພູມສາດ ທີ່ເຝິກຫັດການສອນຢູ່ໂຮງຮຽນມັດທະຍົມຕົ້ນສາທິດ ສົກຮຽນ 2023-2024 ໃນ 9 ດ້ານ ພົບວ່າ: ສະມັດຖະພາບການສອນໂດຍລວມແມ່ນອນໃນເກນລະດັບການປະຕິບັດດີຫຼາຍ ໂດຍສະເພາະໃນດ້ານການເສີມກໍາລັງໃຈ, ດ້ານການໃຊ້ຄໍາຖາມ ແລະ ດ້ານການຄວບຄຸມຫ້ອງຮຽນ. ແນວໃດກໍຕາມການຄົ້ນຄວ້າຍັງໄດ້ຄົ້ນພົບວ່າ ດ້ານການໃຊ້ສື່ການສອນມີການປະຕິບັດຢູ່ໃນລະດັບປານກາງ ເຊິ່ງມີຄ່າສະເລ່ຍເທົ່າກັບ 3.46; ຄ່າຜັນປ່ຽນມາດຖານເທົ່າກັບ 0.66. ການຄົ້ນຄວ້າຄັ້ງນີ້ຍັງແນະນໍາໃຫ້ສຶກສາເພີ່ມເຕີມຕື່ມກ່ຽວກັບສະມັດຖະພາບການສອນຂອງນັກສຶກສາຄູທີ່ເຝິກຫັດໃນຫຼາຍໂຮງຮຽນ ແລະ ລົງເລິກກ່ຽວກັບສະມັດຖະພາບການສອນໃນດ້ານການນໍາໃຊ້ສື່ເຂົ້າໃນການຮຽນການສອນຕື່ມອີກ.

***ຄໍາສັບສໍາຄັນ:*** *ສະມັດຖະພາບການສອນ, ການຄວບຄຸມຫ້ອງຮຽນ, ການນໍາໃຊ້ສື່ການຮຽນການສອນ*

---

**ຕິດຕໍ່ພົວພັນ: ຊອ. ປທ. ວິລະວອນ ໄຊປັນຍາ; ໂທ: 020 58972879; ອີເມວ: wilawone88spy@gmail.com*

# A Study on the Teaching Qualifications of Geography Student Teachers During Their Teaching Practicum at Sathit Junior Secondary School in the 2023–2024 Academic Year

*Wilawone SAYPANYA*

*Department of Geography and History, Pakse Teachers Training College*

## Abstract

This research examines the teaching qualifications of geography student teachers undergoing their teaching practicum at Sathit Junior Secondary School during the 2023–2024 academic year. The study focuses on geography teacher trainees from Pakse Teacher Training College. The population for this research includes administrators, teachers, and junior high school students, totalling 140 individuals, including 69 women. The sample group consists of 103 participants, comprising administrators, teachers, and junior high school students, with 65 women. The research utilizes a questionnaire as the primary data collection tool, and statistical analysis is conducted using the mean and standard deviation. The study identified nine aspects of teaching efficiency, which were generally rated at a very good performance level. These include encouragement, the use of questioning techniques, and classroom management. However, the study found that the use of teaching materials was at a moderate performance level, with a mean value of 3.46 (S.D. = 0.66). The findings suggest that further investigation is needed to enhance the quality of teaching among student teachers during their practicum, particularly in the use of teaching materials

***Key words:*** *Teaching quality, classroom management, utilizing teaching leaning materials*

## 1. ພາກສະເໜີ

*1.2 ຄວາມເປັນມາ ແລະ ຄວາມສາຄັນຂອງບັນຫາ*

ການປະຕິຮູບການສຶກສາແຫ່ງຊາດແມ່ນເປັນການປັບປຸງປ່ຽນແປງຮອບດ້ານໃນຂົງເຂດວຽກງານການສຶກສາ ຊຶ່ງມີຄວາມຈຳເປັນຕ້ອງໄດ້ພັດທະນາການສຶກສາຢ່າງເປັນລະບົບຄົບຊຸດຮອບດ້ານຕາມ 3 ລັກສະນະ ແລະ 5 ຫຼັກມູນ ຂອງການສຶກສາ. ໃນປີ 2025 ຂະແໜງການສຶກສາ ແລະກິລາ ຢູ່ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ຈະມີໂຄງສ້າງການສຶກສາ ແລະມີຊັບພະຍາກອນທີ່ເໝາະສົມເພື່ອເຮັດໃຫ້ພົນລະເມືອງລາວທຸກຄົນເຂົ້າເຖິງການສຶກສາ ແລະກິລາ-ກາຍຍະກຳ ທີ່ມີຄຸນນະພາບ ເພື່ອໃຫ້ປະເທດຊາດໄດ້ຮັບຜົນປະໂຫຍດຈາກການຂະຫຍາຍຕົວທາງດ້ານເສດຖະກິດ ແລະ ຫຼຸດພົ້ນອອກຈາກສະຖານະພາບຄວາມດ້ອຍພັດທະນາ ແລະ ຊຸກຍູ້ເພື່ອບັນລຸການຈັດຕັ້ງປະຕິບັດເປົ້າໝາຍການພັດທະນາແບບຍືນຍົງ. ທັງນີ້ກໍ່ເພື່ອສ້າງໃຫ້ນັກຮຽນ - ນັກສຶກສາເປັນຄົນຮັກຊາດ, ຮັກລະບອບ ປະຊາທິປະໄຕ ປະຊາຊົນ, ຮູ້ມູນເຊື້ອ ຂອງຊາດ ແລະ ຂອງການປະຕິວັດ. ຮູ້ປ່ຽນແປງທັດສະນະຄະຕິ, ວິທີຮຽນ, ມັກອ່ານ ມີຄວາມກະຕືລືລົ້ນໃນການພັດທະນາຕົນເອງຢູ່ສະເໝີ. ນອກນີ້, ການພັດທະນາການສຶກສາຕ້ອງໃຫ້ສອດຄ່ອງກັບແຜນພັດທະນາເສດຖະກິດ-ສັງຄົມ, ຕ້ອງສົມທົບລະຫວ່າງການສຶກສາໃນໂຮງຮຽນ, ຄອບຄົວ ແລະ ສັງຄົມ ເຮັດໃຫ້ການສຶກສາກາຍເປັນພາລະກິດຂອງປວງຊົນ ແລະ ທັງເຮັດໃຫ້ການສຶກສາຕິດພັນກັບພູມປັນຍາທ້ອງຖິ່ນ, ມີວິທະຍາສາດ ແລະ ເທັກໂນໂລຢີທີ່ທັນສະ ໄໝ. (ກະຊວງສຶກສາທິການ ແລະ ກິລາ, 2020).

ວິທະຍາໄລຄູປາກເຊ, ແມ່ນເປັນຫົວໜ່ວຍພື້ນຖານໜຶ່ງໃນການກໍ່ສ້າງ ແລະ ພັດທະນາຄູເພື່ອກ້າວໄປສູ່ມາດຖານຄຸນນະພາບທີ່ດີ ເຊິ່ງໄດ້ເອົາໃຈໃສ່ຢ່າງຕັ້ງໜ້າໃນການຍົກສູງຄຸນນະພາບການກໍ່ສ້າງຄູດ້ວຍຫຼາຍຮູບແບບ ພ້ອມທັງຍົກສູງຄຸນນະພາບຂອງພະນັກງານຄູທີ່ສອນ ຢູ່ສະຖາບັນສ້າງຄູ, ທັງເປັນການປັບປຸງວິທີການ ແລະ ຫຼັກສູດຕ່າງໆ ເພື່ອສອດຄ່ອງກັບແຜນຍຸດທະສາດແຫ່ງຊາດ. ວິທະຍາໄລຄູປາກເຊ ເປັນສະຖານການສຶກສາວິຊາຊີບຄູພາຍໃຕ້ການຊີ້ນຳຂອງກົມສ້າງຄູ ກະຊວງສຶກສາທິການ ແລະ ກິລາ; ເຊິ່ງ ມີພາລະບົດບາດໃນການກໍ່ສ້າງ ແລະ ບຳລຸງຄູອະນຸບານສຶກສາ, ຄູປະຖົມສຶກສາ, ຄູມັດທະຍົມສຶກສາໃນລະດັບຊັ້ນກາງ, ຊັ້ນສູງ ແລະ ປະລິນຍາຕີ ໃຫ້ມີຄຸນສົມບັດ, ຄວາມຮູ້ ແລະ ຄວາມສາມາດ ໄປຕາມ 3 ລັກສະນະ 5 ຫຼັກມູນການສຶກສາຂອງການສຶກສາ ແລະ ເພື່ອສ້າງຄູໃຫ້ກາຍເປັນຄູມືອາຊີບ ແລະ ຕອບສະໜອງຄວາມຮຽກຮ້ອງຕ້ອງການໃນແຕ່ລະໄລຍະໃນການພັດທະນາເສດຖະກິດ-ສັງຄົມຂອງຊາດໄລຍະໃໝ່ (ບົດລາຍງານການປະເມີນຕົນເອງ ການປະກັນຄຸນນະພາບການສຶກສາ ວິທະຍາໄລຄູປາກເຊ, 2019 ໜ້າ 1).

ການສຶກສາສະມັດຖະພາບການຮຽນ - ການສອນມີຜົນດີໃນການພັດທະນາການສອນຂອງຄູ ເພາະການສົ່ງເສີມສະມັດຕະພາບໃນການສອນຕ້ອງອາໄສຂໍ້ມູນທີ່ເອີ້ນວ່າຜົນຍ້ອນກັບຈາກການສຶກສາ ແລະ ທົດລອງ. ດັ່ງນັ້ນ, ການສຶກສາສະພາບການຮຽນ - ການສອນຈຶ່ງມີຢູ່ທຸກຂັ້ນຕອນຂອງການຮຽນຮູ້, ການໃຫ້ຄູ ຫຼື ນັກສຶກສາຄູ ໄດ້ສຶກສາວິເຄາະລາຍລະອຽດໃນແງ່ມຸມຕ່າງໆ

ຂອງສະພາບການຮຽນ - ການສອນຢ່າງມີຈຸດໝາຍ ຈຶ່ງຊ່ວຍໃຫ້ຜູ້ສຶກສາ ຮູ້ສັງເກດ, ເຂົ້າໃຈ, ຮູ້ວິເຄາະຄວາມເປັນມາຂອງຂະບວນການຮຽນ - ການສອນຢ່າງແນບນຽນຂຶ້ນ.

ການສຶກສາ ໝາຍເຖິງ ຂະບວນວິວັດແຫ່ງການຮຽນ - ການສອນ ທາງດ້ານວິທະຍາສາດທຳມະຊາດ, ສັງຄົມ ແລະ ການຄົ້ນຄວ້າທິດສະດີ, ພຶດຕິກຳ ເພື່ອສ້າງຄົນໃຫ້ມີການຂະຫຍາຍຕົວຮອບດ້ານ, ມີຄຸນສົມບັດສິນທຳປະຕິວັດ, ມີຄວາມຮູ້ ຄວາມສາມາດ, ມີວິຊາຊີບ, ມີສຸຂະພາບ ພາລະນາໄມ, ມີຄວາມສີວິໄລທາງດ້ານຈິດໃຈ, ມີສິລະປະ, ມີລະບຽບວິໄນ, ມີນ້ຳໃຈຮັກປະເທດຊາດ, ຮັກລະບອບປະຊາທິປະໄຕ ປະຊາຊົນ ເພື່ອຕອບສະໜອງຄວາມຮຽກຮ້ອງຕ້ອງການຂອງພາລະກິດປົກປັກຮັກສາ ແລະ ສ້າງສາປະເທດຊາດ.

ການສຶກສາແມ່ນຂໍກຸນແຈເພື່ອໄຂທາງໃຫ້ຄົນເຮົາສາມາດແກ້ໄຂບັນຫາຂອງຊີວິດໄດ້ ແລະ ສາມາດນຳເອົາຄວາມຮູ້ນີ້ໄປພັດທະນາໃນຂົງເຂດວຽກງານ. ຖ້າບໍໄດ້ຮັບການສຶກສາຄົນເຮົາຈະບໍ່ສາມາດມີຜົນສຳເລັດ ໃນໜ້າທີ່ວຽກງານ. ຖ້າບໍໄດ້ຮັບການສຶກສາຄົນເຮົາຈະບໍ່ສາມາດມີຜົນສຳເລັດ ໃນໜ້າທີ່ວຽກງານ. (ກົດໝາຍວ່າດ້ວຍການສຶກສາສະບັບປັບປຸງໃໝ່ ສະພາແຫ່ງຊາດ. ນະຄອນຫຼວງວຽງຈັນ, 2007, ໜ້າ 1-2).

ການສຶກສາຢູ່ໃນໂຮງຮຽນຂອງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແມ່ນການຈັດຕັ້ງສຶກສາອົບຮົມຄົນໃນສັງຄົມລາວ ເຊິ່ງມີໜ້າທີ່ສຶກສາອົບຮົມຜູ້ຮຽນໃຫ້ກາຍເປັນພົນລະເມືອງດີຂອງລະບອບສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແລະ ໄດ້ຈັດຕັ້ງການສຶກສາຂຶ້ນນັບຕັ້ງແຕ່ຊັ້ນອະນຸບານຈົນເຖິງຊັ້ນມະຫາວິທະຍາໄລ. ການສຶກສາ ຢູ່ ສປປ ລາວ ແຕ່ລະຊັ້ນຕ້ອງໃຫ້ສອດຄ່ອງກັບແນວທາງນະໂຍບາຍການເມືອງຂອງພັກປະຊາຊົນປະຕິວັດລາວ ໝາຍຄວາມວ່າ ການສຶກສາຕ້ອງເຮັດໜ້າທີ່ສ້າງຄົນລາວໃຫ້ເປັນຄົນດີ, ມີສຸຂະພາບແຂງແຮງ, ຕາມເນື້ອໃນນະໂຍບາຍການສຶກສາຂອງພັກປະຊາຊົນປະຕິວັດລາວ ວາງອອກຢູ່ໃນແຕ່ລະຊັ້ນ, ແຕ່ລະປີຕ້ອງຖືກກຳນົດໄວ້ຢ່າງລະອຽດກ່ຽວກັບຈຸດປະສົງຄາດ ໝາຍຂອງຄວາມຮູ້, ຄວາມເຂົ້າໃຈ ແລະ ຄວາມສາມາດທາງພຶດຕິກຳ (ກະຊວງສຶກສາທິການ, 2008).

ຫຼັກການສອນມັດທະຍົມຕອນຕົ້ນສາ◌ໍລັບຄູທຸກຄົນຕ້ອງປະຕິບັດຕາມ 7 ຫຼັກການດັ່ງລຸ່ມນີ້:

ຫຼັກການທີ 1: ການສອນຕ້ອງສຶກສາແນວຄິດໃຫ້ແກ່ນັກຮຽນ. ແຕ່ຕ້ອງອີງໃສ່ຈຸດພິເສດຂອງເນື້ອໃນບົດຮຽນແຕ່ລະບົດ. ເພື່ອສ້າງແນວຄິດການເມືອອງອັນຖືກຕ້ອງໃຫ້ແກ່ເດັກໃນອານາຄົດ ເປັນພົນລະເມືອງດີຂອງຊາດ.

ຫຼັກການທີ 2: ການສອນຕ້ອງສິ່ງຄວາມຮູ້ວິທະຍາສາດທຳມະຊາດ ແລະ ສັງຄົມໃຫ້ຊັດ ເຈນ. ເປັນຕົ້ນໃນການອະທິບາຍບົດຮຽນແຕ່ລະບົດໃຫ້ຖືກຕ້ອງຊັດເຈນ. ເພື່ອໃຫ້ນັກຮຽນມີຄວາມຮູ້ອັນແນ່ນອນ ແລະ ເຊື່ອໝັ້ນຕໍ່ວິທະຍາສາດ.

ຫຼັກການທີ 3: ການສອນຕ້ອງໃຫ້ສອດຄ່ອງລະຫວ່າງເນື້ອໃນບົດຮຽນ ກັບຄວາມສາມາດຮັບຮູ້ຂອງນັກຮຽນແຕ່ລະຊ່ຳອາຍຸ ເຊັ່ນ ລະຫວ່າງຄວາມຮູ້, ລະດັບຄວາມຮູ້, ຈຳນວນຊົ່ວໂມງແຕ່ລະບົດທີ່ນຳມາສອນ.

ຫຼັກການທີ 4: ການສອນຕ້ອງໃຫ້ຄວາມຮູ້ມີການຕໍ່ເນື່ອງກັນເປັນລະບົບໃນແຕ່ລະບົດ. ເພື່ອໃຫ້ຜູ້ຮຽນເຂົ້າໃຈງ່າຍ, ມີຄວາມຮູ້ເປັນລະບົບ ແລະ ແໜ້ນໜາດີ.

ຫຼັກການທີ 5: ການສອນຕ້ອງມີຄວາມປະຊາທິປະໄຕຕໍ່ຜູ້ຮຽນ ໝາຍຄວາມວ່າ ນັກຮຽນທຸກຄົນຕ້ອງມີສິດຕອບຄຳຖາມຄູ ແລະ ຄູກໍໃຫ້ໂອກາດແກ່ນັກຮຽນຖາມ, ຕອບໃນໝູ່ຄະນະຕາມຫົວຄິດປະດິດສ້າງ, ຄວາມສົນໃຈຂອງນັກຮຽນ ຄູມີແຕ່ຊຸກຍູ້ໃຫ້ນັກຮຽນກ້າຫານແກ້ຄວາມຂ້ອງໃຈຂອງຕົນເອງກັບໝູ່ຄະນະ.

ຫຼັກການທີ 6: ການສອນຕ້ອງເອົາໃຈໃສ່ນັກຮຽນທີ່ມີຈຸດພິເສດ, ນັກຮຽນແຕ່ລະຄົນລ້ວນແຕ່ມີຈຸດພິເສດແຕກຕ່າງກັນທາງດ້ານຮ່າງກາຍ, ຈິດໃຈ, ການປະພຶດ, ຄວາມສາມາດ, ຄວາມພິກໄຫວ, ສຸຂະພາບ.

ຫຼັກການທີ 7: ການສອນຕ້ອງໃຫ້ມີເຄື່ອງສຳພັດດ້ວຍອິນຊີທັງ 5 ແລະ ລົງພາກປະຕິບັດຕົວຈິງ. ໃນເວລາສອນຄູຕ້ອງຊອກຫາທຸກວິທີໃຫ້ມີເຄື່ອງທົດລອງ, ເຄື່ອງສະແດງປະຈັກຕາໃຫ້ນັກຮຽນເບິ່ງ ຫຼື ເຮັດຕົວຈິງ ທັງນີ້ກໍເພື່ອໃຫ້ນັກຮຽນກຳໄດ້ບົດຮຽນໄດ້ດົນນານ ແລະ ມີຄວາມກ້າຫານທາງດ້ານການທົດລອງວິທະຍາສາດຕ່າງໆ.

ການສອນແມ່ນຂະບວນການປະຕິສຳພັນລະຫວ່າງຜູ້ສອນ ກັບ ຜູ້ຮຽນ, ເພື່ອເຮັດໃຫ້ຜຮຽນເກີດການປ່ຽນແປງພຶດຕິກຳຕາມຈຸດປະສົງທີ່ກຳນົດ, ເຊິ່ງຕ້ອງອາໃສທັວິທະຍາສາດ ແລະ ສິລະປະຂອງຜູ້ສອນ. ການສອນມີຄວາມສຳຄັນຕໍ່ຜູ້ຮຽນເພາະການສອນທີ່ດີເປັນການສອນທີ່ຕັ້ງໃຈເຮັດໃຫ້ເກີດການຮຽນຮູ້, ຜູ້ສອນດຳເນີນການສອນຢ່າງມີຫຼັກການ, ມີຄວາມຮູ້, ມີທັກສະຈະຊ່ວຍໃຫ້ຜູ້ຮຽນໄດ້ຢ່າງມີຄວາມໝາຍ, ມີຄຸນຄ່າທັງເປັນການປະຢັດເວລາ.

ທັກສະການສອນ: ທັກສະການສອນເປັນຄວາມສາມາດທາງດ້ານພຶດຕິກຳການສອນອັນເປັນຮູບແບບສະເພາະສ່ວນຍ່ອຍທີ່ເປັນອົງປະກອບຂອງວິທີສອນຫຼັກ. ປະເພດທັກສະການສອນປະກອບມີ:

ທັກສະການໃຊ້ກິລິຍາທ່າທາງ: ໝາຍເຖິງ ບຸກຄະລິກເປັນສິ່ງທີ່ຈຳເປັນສຳລັບຄູ ມັນບໍ່ພຽງແຕ່ສະແດງອອກທາງນອກໃຫ້ຜູ້ອື່ນເຫັນ ແຕ່ມັນຍັງໝາຍເຖິງ ການສະແດງອອກຂອງຄູທາງດ້ານການປາກເວົ້າ, ກິລິຍາ ແລະ ຈິດໃຈ. ບຸກຄະລິກກະພາບຂອງຄູ ຈະເປັນສິ່ງດຶງດູດຄວາມສົນໃຈຂອງນັກຮຽນໃນເວລາສອນ.

ທັກສະການໃຊ້ຄຳຖາມ: ໝາຍເຖິງການໃຊ້ຄຳຖາມຂອງຄູໃນເວລາດຳເນີນການຮຽນ-ການສອນໃນຫ້ອງແມ່ນເປັນອົງປະກອບທີ່ສຳຄັນຢ່າງໜຶ່ງໃນຂະບວນການຈັດການຮຽນ-ການສອນ. ຄຳຖາມທີ່ຄູໃຊ້ໃນຫ້ອງນັບວ່າເປັນເຄື່ອງມືທີ່ຊ່ວຍກວດສອບຄວາມຮູ້-ຄວາມຈຳຂອງນັກຮຽນ ແລະ ເປັນການກະຕຸກຊຸກຍູ້ໃຫ້ການຮຽນຂອງນັກຮຽນມີປະສິດທິພາບສູງຂຶ້ນ.

ທັກສະການອະທິບາຍ: ໝາຍເຖິງການຮຽນ ແລະ ການສອນກໍຄືເຮັດໃຫ້ຜູ້ຮຽນເກີດມີພຶດຕິກໍາການຮຽນຮູ້ຫຼາຍຂຶ້ນ ຄື:ໄດ້ຮັບຄວາມຮູ້,ຄວາມເຂົ້າໃຈ, ເກີດທັກສະ ແລະ ທັດສະນະຄະຕິທີ່ດີຕໍ່ການຮຽນ. ການທີ່ຈະສອນໃຫ້ນັກຮຽນໄດ້ຮັບຜົນດັ່ງກ່າວມາຂ້າງເທິງນັ້ນ ມັນຈໍາເປັນທີ່ສຸດສໍາລັບຜູ້ສອນທີ່ຈະຕ້ອງຮູ້ຈັກການຖ່າຍທອດຄວາມຮູ້ທີ່ຫຼາກຫຼາຍ ແລະ ຈັດກິດຈະກໍາໃຫ້ເໝາະສົມກັບລະດັບ ແລະ ວິທີການຮຽນຮູ້ຂອງຜູ້ຮຽນ ເພື່ອເຮັດໃຫ້ຜູ້ຮຽນໄດ້ມີສ່ວນຮ່ວມໃນກິດຈະກໍາການຮຽນໃຫ້ຫຼາຍຂຶ້ນ.

ທັກສະການນໍາໃຊ້ສື່ການສອນ: ໝາຍເຖິງ ສິ່ງຕ່າງໆທີ່ໃຊ້ເປັນເຄື່ອງມື ຫຼື ຊ່ອງທາງສໍາລັບການສອນ ທີ່ເຮັດໃຫ້ການສອນຂອງຜູ້ສອນສົ່ງໄປເຖິງຜູ້ຮຽນເຮັດໃຫ້ຜູ້ຮຽນສາມາດເກີດການຮຽນຮູ້ຕາມຈຸດປະສົງ ຫຼື ຈຸດມຸ້ງ ໝາຍທີ່ຜູ້ສອນວາງໄວ້ເປັນຢ່າງດີ.

ທັກສະການກະຕຸ້ນຄວາມສົນໃຈ: ການກະຕຸ້ນຄວາມສົນໃຈເປັນເຕັກນິກອັນໜຶ່ງທີ່ຈໍາເປັນຕໍ່ການສອນເພາະມັນຊ່ວຍໃຫ້ການຮຽນ - ການສອນປະສົບຜົນສໍາເລັດຢ່າງດີ ໂດຍສະເພາະນັກຮຽນຊັ້ນປະຖົມ ຫຼື ຊັ້ນມັດທະຍົມຕົ້ນ ເຊິ່ງເປັນໄວມີຄວາມສົນໃຈຢາກຮູ້ຢາກເຫັນ, ຢາກທົດລອງ ແລະ ຢູ່ຊື່ໆບໍ່ໄດ້ ແຕ່ຄວາມສົນໃຈຕ່າງໆເຫຼົ່ານັ້ນພັດມີເວລາສັ້ນ ແລະ ຈໍາກັດ.

ທັກສະການຄວບຄຸມຫ້ອງ: ການຄວບຄຸມຫ້ອງແມ່ນປັດໄຈທີ່ສໍາຄັນໜຶ່ງຂອງການຮຽນ - ການສອນທີ່ມີປະສິດທິພາບ. ການຄວບຄຸມຫ້ອງທີ່ດີຈະຊ່ວຍສະໜັບສະໜູນໃຫ້ນັກຮຽນເກີດການຮຽນຮູ້, ເຈຕະຄະຕິ ແລະ ທັກສະໃນການຮຽນທີ່ຊ່ວຍເສີມສ້າງບັນຍາກາດໃນການຮຽນໃຫ້ດີຂຶ້ນ. ດັ່ງນັ້ນ, ການຄວບຄຸມຫ້ອງຕ້ອງໃຫ້ສອດຄ່ອງກັບສະພາບຜູ້ຮຽນ, ເໝາະກັບໄວອາຍຸ ແລະ ວຸດທິພາວະ.

ທັກສະການເສີມກໍາລັງໃຈ: ການເສີມກໍາລັງໃຈ ໝາຍເຖິງການເຮັດແນວໃດໃຫ້ຜູ້ຮຽນມີຄວາມພູມໃຈທີ່ຈະຮຽນ ແລະ ເຮັດແນວໃດຈະຊ່ວຍໃຫ້ຜູ້ຮຽນພໍໃຈຈະສະແຫວງຫາຄວາມຮູ້ຢ່າງເປັນປະຈໍາຈົນກາຍເປັນນິໄສ. ການເສີມກໍາລັງໃຈເປັນຄວາມພະຍາຍາມຂອງຜູ້ສອນ ທີ່ຈະເຮັດໃຫ້ຜູ້ຮຽນທີ່ຂາດຄວາມເຊື່ອໝັ້ນຕົນເອງໃຫ້ເກີດມີຄວາມກ້າຫານທີ່ຈະຕອບຄໍາຖາມ ແລະ ສະແດງຄວາມຄິດເຫັນ ຫຼື ມີສ່ວນຮ່ວມໃນກິດຈະກໍາການຮຽນ-ການສອນ ທີ່ກໍາລັງດໍາເນີນຢູ່ໃນຫ້ອງຮຽນ ແລະ ເປັນຄວາມພະຍາຍາມທີ່ຈະຊ່ວຍໃຫ້ຜູ້ຮຽນເກີດມີກໍາລັງໃຈ,ມີຄວາມຕັ້ງໃຈຄົ້ນຄວ້າຮໍ່າຮຽນຢູ່ເລື້ອຍໆ.

ທັກສະການສະຫຼຸບບົດຮຽນ: ການສະຫຼຸບບົດຮຽນ ຄືການທີ່ຄູພະຍາຍາມເຮັດໃຫ້ນັກຮຽນສາມາດສະຫຼຸບແນວຄວາມຄິດ, ຄວາມເຂົ້າໃຈຂອງຕົນເອງໃຫ້ຖືກຕ້ອງ. ບາງທີອາດເປັນການສະຫຼຸບຫຼັກເກນແນວຄວາມຄິດສໍາຄັນຈາກການຮຽນ - ການສອນແຕ່ລະຄັ້ງ. ການສະຫຼຸບບົດຮຽນສາມາດສະຫຼຸບໄດ້ໃນແຕ່ລະກິດຈະກໍາ ການຮຽນ - ການສອນ ຫຼື ອາດຈະສະຫຼຸບຕອນທ້າຍຂອງບົດຮຽນ (ກະຊວງສຶກສາທິການ, 2009).

ທັກສະການປະເມີນຜົນການຮຽນ: ການປະເມີນ ແມ່ນການນໍາເອົາຜົນຂອງການວັດຜົນມາພິຈະລະນາວິນິດໄສ, ຕັດສິນຄຸນຄ່າໂດຍປຽບທຽບກັບເກນມາດຕະຖານທີ່ກໍານົດໄວ້. ການປະເມີນດ້ານການສຶກສາ ໝາຍເຖິງການເອົາຜົນຂອງການວັດຜົນການສຶກສາມາຕີລາຄາ ແລະ ວິນິດໄສ ແລ້ວຕັດສິນໃຈໂດຍອາໄສຫຼັກການຢ່າງໃດຢ່າງໜຶ່ງ (ກະຊວງສຶກສາທິການ, 2008).

ວິຊາພູມີສາດແມ່ນວິທະຍາສາດຂະແໜງໜຶ່ງທີ່ສຶກສາຄວາມສໍາພັນລະຫວ່າງສິ່ງແວດລ້ອມທາງທໍາມະຊາດ ແລະ ສັງຄົມທີ່ປະກົດເທິງໜ້າໂລກ. ເຫດການ ແລະ ປະກົດການຕ່າງໆທາງດ້ານພູມີສາດໄດ້ສົ່ງຜົນກະທົບໂດຍກົງຕໍ່ກັບການດໍາລົງຊີວິດຂອງມະນຸດເຮົາ. ດັ່ງນັ້ນ, ການສຶກສາວິຊາພູມມີສາດ ຈຶ່ງມີຄວາມສາມາດເຮັດໃຫ້ມະນຸດເຂົ້າໃຈເຖິງຄວາມເປັນຈິງຂອງໂລກທໍາມະຊາດທີ່ຕົນອາໃສຢູ່ ແລະ ຍັງສາມາດປັບຕົວເຂົ້າກັບສະພາບແວດລ້ອມໄດ້ດີ. ເມື່ອເປັນດັ່ງນັ້ນ, ທຸກໆປະເທດໃນໂລກໃຈໄດ້ສົນໃຈສຶກສາວິຊາ ພູມີສາດ. ແລະ ມີບົດບາດສໍາຄັນໃນການຮຽນ - ການສອນ, ສ້າງໃຫ້ນັກຮຽນມີຄວາມຮູ້ຢ່າງກວ້າງຂວາງ, ເຫັນແຈ້ງບັນຫາຢ່າງເລິກເຊິ່ງ ແລະ ຮູ້ຈັກປັບຕົວເຂົ້າກັບສະພາບແວດລ້ອມທີ່ມີການປ່ຽນແປງໄດ້ຢ່າງວ່ອງໄວ. ສະນັ້ນ, ຈຶ່ງຕ້ອງໄດ້ເອົາໃຈໃສ່ແນະນັກຮຽນໃຫ້ມີຄວາມສະຫງວນມັກ ແລະ ຕັ້ງໃຈສຶກສາຄົ້ນຄ້ວາຮໍ່າຮຽນວິຊາ ພູມີສາດໃຫ້ມີຄວາມເຂົ້າໃຈຢ່າງເລິກເຊິ່ງ (ກະຊວງສຶກສາທິການ, 2008).

ສະນັ້ນ, ເພື່ອປະຕິບັດໄປຕາມວິໄສທັດ “ວິທະຍາໄລຄູປາກເຊ ສູນກາງການສຶກສາຄູ ກ້າວສູ່ຄວາມເປັນເລີດ ຮັບໃຊ້ສັງຄົມ ເຊື່ອມໂຍງສາກົນ” ສາຂາຄູພູມສາດ ແມ່ນສາຂາໜຶ່ງທີ່ຂຶ້ນກັບ ພາກວິຊາຄູພູມສາດ - ປະຫວັດສາດ ເຊິ່ງມີຫຼັກສູດການຮຽນ - ການສອນທີ່ນອນຢູ່ໃນລະບົບ 12+4 ປະລິນຍາຕີ, ມີການຈັດການຮຽນ - ການສອນຕາມຫຼັກສູດ ເຊິ່ງໄດ້ດໍາເນີນໄປຢ່າງເຂັ້ມງວດເພື່ອໃຫ້ຜູ້ຮຽນໄດ້ຮຽນຄົບທຸກລາຍວິຊາທີ່ມີໃນຫຼັກສູດ. ເພື່ອປະເມີນການສອນຂອງຄູ-ອາຈານໃນແຕ່ລະວິຊາທີ່ນອນໃນສາຂາຄູພູມສາດວ່າມີຄຸນນະພາບພຽງໃດ, ໄດ້ຮັບ ໝາກຜົນພຽງໃດໃນການຈັດການຮຽນ-ການສອນ, ພົບບັນຫາຫຍຸ້ງຍາກຫຍັງແດ່ທີ່ຕ້ອງປັບປຸງ, ແກ້ໄຂ ແລະ ເພື່ອເປັນການພັດທະນາການສອນຂອງຄູ-ອາຈານໃຫ້ດີຂຶ້ນກວ່າເກົ່າ. ດັ່ງນັ້ນ, ຜູ້ວິໄຈຈຶ່ງໄດ້ເຮັດການວິໄຈໃນຫົວຂໍ້: *“ສຶກສາສະມັດຖະພາບການສອນຂອງນັກສຶກສາ ສາຂາຄູພູມສາດທີ່ເຝິກຫັດການສອນຢູ່ໂຮງຮຽນມັດທະຍົມຕົ້ນສາທິດ ສົກຮຽນ 2023-2024”*

*1.2 ຈຸດປະສົງຂອງການຄົ້ນຄ້ວາ*

ເພື່ອສຶກສາສະມັດຖະພາບການສອນ ຂອງນັກສຶກສາ ສາຂາຄູພູມສາດທີ່ລົງເຝິກຫັດການສອນຢູ່ໂຮງຮຽນມັດທະຍົມຕອນຕົ້ນສາທິດສົກຮຽນ 2023-2024

*1.3 ຄໍາຖາມຂອງການຄົ້ນຄ້ວາ*

ສະມັດຖະພາບການສອນ ຂອງນັກສຶກສາສາຂາຄູພູມສາດທີ່ລົງເຝິກຫັດການສອນຢູ່ໂຮງຮຽນມັດທະຍົມຕອນຕົ້ນສາທິດເປັນແນວໃດ?

## 2. ບົດຄົ້ນຄວ້າທີ່ກ່ຽວຂ້ອງ

ໃນການວິໄຈຄັ້ງນີ້ ຜູ້ວິໄຈໄດ້ສຶກສາບົດຄົ້ນຄວ້າທີ່ກ່ຽວຂ້ອງກັບຫົວຂໍ້ການວິໄຈຄັ້ງນີ້ມີດັ່ງນີ້:

ທີມງານວິໄຈ ວິທະຍາໄລຄູປາກເຊ (2009) ໄດ້ສຶກສາຄົ້ນຄວ້າວິໄຈກ່ຽວກັບ "ສຶກສາສະມັດຖະພາບພື້ນຖານການສອນຂອງຄູທີ່ຮຽນຈົບຈາກ ວິທະຍາໄລຄູປາກເຊ ໃນ 4 ແຂວງພາກໃຕ້ ສົກຮຽນ 2005-2006".

ຜົນການຄົ້ນຄວ້າວິໄຈ ພົບວ່າ:

1. ສະມັດຖະພາບພື້ນຖານຂອງຄູ ໂດຍລວມ ແລະ ລາຍສະມັດຖະພາບ ຢູ່ໃນລະດັບຫຼາຍ ໃນ 7 ດ້ານຄື: ການໃຊ້ອາຈາກິລິຍາທ່າທາງ, ການຕັ້ງຄຳຖາມ, ການອະທິບາຍເລົ່າເລື່ອງ, ການດຶງດູດຄວາມສົນໃຈ, ການຈັດການຄຸ້ມຄອງຫ້ອງຮຽນ, ການໃຫ້ກຳລັງໃຈ ແລະ ການປະເມີນຜົນການຮຽນ. ສ່ວນອີກ ສອງດ້ານຢູ່ໃນລະດັບປານກາງຄື ການໃຊ້ສື່ການສອນ ແລະ ການສະຫຼຸບບົດຮຽນ.

2. ຄວາມຄິດເຫັນຂອງຜູ້ບໍລິຫານ, ວິຊາການ ແລະ ຄູສອນຕໍ່ກັບສະມັດຖະພາບພື້ນຖານການສອນຂອງຄູສອນທີ່ຮຽນຈົບວິທະຍາໄລຄູປາກເຊ ໃນ 9 ດ້ານໂດຍລວມແມ່ນຢູ່ໃນລະດັບຫຼາຍ ( $\overline{X}$=3.55). ໂດຍມີຄ່າສະເລ່ຍສູງສຸດຄື: ການໃຊ້ອາຈາກິລິຍາທ່າທາງ ( $\overline{X}$=3.71) ແລະ ລະດັບສຸດທ້າຍຄື: ການນຳໃຊ້ສື່ການສອນ ( $\overline{X}$=3.41). ໂດຍພົບວ່າ ຄູປະເມີນຕົນເອງ ມີຄ່າສະເລ່ຍໂດຍລວມ ( $\overline{X}$=3.49) ແລະ ຜູ້ອື່ນປະເມີນຄ່າສະເລ່ຍໂດຍລວມ ( $\overline{X}$=3.68).

ຈາກການຄົ້ນຄວ້າວິໄຈສະຫຼຸບໄດ້ວ່າ: ສະມັດຖະພາບພື້ນຖານການສອນຂອງຄູສອນທີ່ຮຽນຈົບວິທະຍາໄລຄູປາກເຊໂດຍລວມແມ່ນນອນໃນການປະຕິບັດຫຼາຍ. ແຕ່ຍັງມີບາງດ້ານຍັງມີການປະຕິບັດບໍ່ຫຼາຍເປັນຕົ້ນແມ່ນດ້ານການນຳໃຊ້ສື່ການສອນ, ການປະເມີນຕົນເອງຂອງຄູ.

## 3.ວິທີດຳເນີນການຄົ້ນຄວ້າ

*3.1.ປະຊາກອນ ແລະ ກຸ່ມຕົວຢ່າງ*

ປະຊາກອນທີ່ໃຊ້ໃນການວິໄຈຄັ້ງນີ້ໄດ້ແກ່ ຜູ້ບໍລິຫານ, ຄູສອນ ແລະ ນັກຮຽນມັດທະຍົມຕອນຕົ້ນສາທິດ ຈຳນວນທັງໝົດ 140 ຄົນ, ຍິງ 69 ຄົນ.

ກຸ່ມຕົວຢ່າງທີ່ໃຊ້ໃນການວິໄຈຄັ້ງນີ້ໄດ້ແກ່ ຜູ້ບໍລິຫານ, ຄູສອນ ແລະ ນັກຮຽນມັດທະຍົມຕອນຕົ້ນສາທິດລວມທັງໝົດ 103 ຄົນ, ຍິງ 65 ຄົນ, ຊາຍ 38 ຄົນ.

*3.2. ເຄື່ອງມືທີ່ໃຊ້ໃນການເກັບກຳຂໍ້ມູນ*

ເຄື່ອງມືທີ່ໃຊ້ໃນການເກັບກຳ ຂໍ້ມູນໃນຄັ້ງນີ້ຜູ້ວິໄຈແມ່ນນຳໃຊ້ແບບສອບຖາມ (Quationaaire) ໂດຍມີລຳດັບຂັ້ນຕອນການສ້າງເຄື່ອງມືດັ່ງຕໍ່ໄປນີ້:

1.ສຶກສາສະພາບການຮຽນຂອງນັກຮຽນ ແລະ ສະພາບການສອນຂອງນັກສຶກສາຄູ.ທີ່ລົງເຝິກຫັດການສອນຢູ່ໂຮງຮຽນມັດທະຍົມຕົ້ນສາທິດ.

2.ສຶກສາຕຳລາ, ເອກະສານທີ່ກ່ຽວຂ້ອງກັບຫົວຂໍ້ການວິໄຈ.

3.ສ້າງແບບສອບຖາມໃຫ້ສອດຄ່ອງກັບເນື້ອໃນຫົວຂໍ້ການວິໄຈ.

4.ຜູ້ວິໄຈນຳເອົາແບບສອບຖາມທີ່ໄດ້ສ້າງຂຶ້ນໄປສະເໜີຕໍ່ອາຈານທີ່ປຶກສາ.

5.ຜູ້ວິໄຈໄດ້ຈັດພິມແບບສອບຖາມສະບັບສົມບູນ ແລະ ນຳໄປເກັບກຳຂໍ້ມູນຕົວຈິງກັບກຸ່ມຕົວຢ່າງ.

ລັກສະນະແບບສອບຖາມໄດ້ແບ່ງອອກເປັນ 2 ຕອນ ໄດ້ສ້າງຂຶ້ນຈຳນວນ 103 ຊຸດ ດັ່ງນີ້:

ຕອນທີ1:ສອບຖາມກ່ຽວກັບສະມັດຖະພາບຂອງຜູ້ຕອບແບບສອບຖາມໂດຍຈຳແນກຕາມ ເພດ, ອາຍຸ, ຕຳແໜ່ງ ໂດຍປະເມີນຄ່າເປັນເປີເຊັນ (%).

ຕອນທີ2:ສອບຖາມກ່ຽວກັບສະມັດຖະພາບການສອນ ຂອງນັກສຶກສາສາຂາຄູພູມສາດທີ່ເຝິກຫັດການສອນຢູ່ໂຮງຮຽນມັດທະຍົມຕົ້ນສາທິດ. ແບບສອບຖາມເປັນແບບປະມານຄ່າ (Rating Scale) ໂດຍໃຊ້ເກນກຳນົດນ້ຳໜັກຄະແນນ ແລະ ມາດຕາສ່ວນປະມານຄ່າຈັດລຳດັບ ມີ 5 ລະດັບດັ່ງນີ້:

5 ໝາຍເຖິງລະດັບປະຕິບັດຫຼາຍທີ່ສຸດ.

4 ໝາຍເຖິງລະດັບປະຕິບັດຫຼາຍ.

3 ໝາຍເຖິງລະດັບປະຕິບັດປານກາງ.

2 ໝາຍເຖິງລະດັບປະຕິບັດນ້ອຍ.

1 ໝາຍເຖິງລະດັບປະຕິບັດນ້ອຍທີ່ສຸດ.

*3.3.ວິທີເກັບກຳຂໍ້ມູນ*

ຜູ້ວິໄຈດຳເນີນການເກັບຂໍ້ມູນຕາມລຳດັບດັ່ງຕໍ່ໄປນີ້:

1.ຂໍໜັງສືຈາກຜູ້ອຳນວຍການວິທະຍາໄລຄູປາກເຊ.

2.ເອົາໜັງສືຈາກຜູ້ອຳນວຍການນຳສະເໜີຕໍ່ຜູ້ອຳນວຍການໂຮງຮຽນມັດທະຍົມຕົ້ນສາທິດ.

3.ນຳເອົາແບບສອບຖາມລົງໄປເກັບກຳຂໍ້ມູນຕົວຈິງນຳກຸ່ມຕົວຢ່າງ.

4.ເກັບເອົາແບບສອບຖາມຄືນນຳກຸ່ມຕົວຢ່າງ

5.ນຳເອົາແບບສອບຖາມມາວິເຄາະຜົນໂດຍການນຳໃຊ້ສະຖິຕິ.

*3.4 ການວິເຄາະຂໍ້ມູນ ແລະ ສະຖິຕິທີ່ໃຊ້ໃນການຄົ້ນຄ້ວາ*

ຜູ້ວິໄຈໄດ້ດຳເນີນການວິເຄາະຂໍ້ມູນໂດຍການນຳໃຊ້ສະຖິຕິມາວິເຄາະຂໍ້ມູນທີ່ໄດ້ຈາກແບບສອບເຊິ່ງມີຂັ້ນຕອນດັ່ງລຸ່ມນີ້:

1.ວິເຄາະຂໍ້ມູນກ່ຽວກັບສະຖານະພາບຜູ້ຕອບແບບສອບຖາມໂດຍຊອກຫາຄ່າເປີເຊັນ (Percentage)

2.ວິເຄາະຂໍ້ມູນກ່ຽວກັບສະມັດຖະພາບການສອນຂອງນັກສຶກສາ ສາຂາຄູພູມສາດທີ່ເຝິກຫັດການສອນຢູ່ໂຮງຮຽນ

ມັດທະຍົມຕົ້ນສາທິດ ໂດຍການຄຳນວນເປັນຄ່າສະເລ່ຍ ( $\overline{X}$ ) ແລະ ຄ່າບ່ຽງເບນມາດຕະຖານ (SD).

ການແປຜົນຄວາມໝາຍຄ່າສະເລ່ຍຂອງຂໍ້ມູນໄດ້ແບ່ງອອກເປັນ 5 ລະດັບດັ່ງນີ້:

ຄ່າສະເລ່ຍ 4.51 – 5.00 ໝາຍເຖິງລະດັບປະຕິບັດຫຼາຍທີ່ສຸດ.

ຄ່າສະເລ່ຍ 3.51 – 4.50 ໝາຍເຖິງລະດັບປະຕິບັດຫຼາຍ.

ຄ່າສະເລ່ຍ 2.51 – 3.50 ໝາຍເຖິງລະດັບປະຕິບັດປານກາງ.

ຄ່າສະເລ່ຍ 1.51 – 2.50 ໝາຍເຖິງລະດັບປະຕິບັດນ້ອຍ.

ຄ່າສະເລ່ຍ 1.00 – 1.50 ໝາຍເຖິງລະດັບປະຕິບັດນ້ອຍທີ່ສຸດ.

ສະຖິຕິທີ່ໃຊ້ໃນການວິເຄາະຂໍ້ມູນ

ສູດຄິດໄລ່ເປີເຊັນ

$$P = \frac{F}{N} x100$$

P ໝາຍເຖິງເປີເຊັນ (%)

F ໝາຍເຖິງຄວາມຖີ່

N ໝາຍເຖິງກຸ່ມຕົວຢ່າງ

ສູດຄິດໄລ່ຄ່າສະເລ່ຍ

$$\overline{X} = \frac{\sum_{i=1}^{N} X_i}{N}$$

$\overline{X}$ ໝາຍເຖິງຄ່າສະເລ່ຍ

$\sum_{i=1}^{N} X_i$ ໝາຍເຖິງຜົນບວກຂອງຄະແນນທັງໝົດ

N ໝາຍເຖິງກຸ່ມຕົວຢ່າງ

ສູດຄິດໄລ່ຄ່າຜັນປ່ຽນມາດຖານ

$$SD = \sqrt{\frac{1}{n-1} \sum_{i=1}^{N} \left(X_i - \overline{X}\right)^2}$$

SD ໝາຍເຖິງຄ່າຜັນປ່ຽນມາດຖານ

$X_i$ ໝາຍເຖິງເມັດເຄິ່ງກາງຂອງຊັ້ນ

$\overline{X}$ ໝາຍເຖິງຄ່າສະເລ່ຍ

N ໝາຍເຖິງຈຳນວນຂໍ້ມູນທັງໝົດ

## 4. ຜົນການຄົ້ນຄວ້າ

ຜົນການຄົ້ນຄວ້າວິໄຈກ່ຽວກັບສະມັດຖະພາບການສອນຂອງນັກສຶກສາ ສາຂາຄູພູມສາດ ທີ່ເຝິກຫັດການສອນຢູ່ໂຮງຮຽນມັດທະຍົມຕົ້ນສາທິດ ສົກຮຽນ 2023-2024 ໃນ 9 ດ້ານ ພົບວ່າ:

1. ດ້ານການໃຊ້ອາຈາກິລິຍາທ່າທາງໂດຍລວມພົບວ່າຢູ່ໃນລະດັບຫຼາຍ ເຊິ່ງມີຄ່າສະເລ່ຍເທົ່າກັບ ( $\overline{X}$ =3.78); ຄ່າຜັນປ່ຽນມາດຖານເທົ່າກັບ (S.D=0.61). ຖ້າຈຳແນກເປັນແຕ່ລະສະມັດຖະພາບ ພົບວ່າ ຄູເວົ້າຈາອ່ອນຫວານຕໍ່ນັກຮຽນມີການປະຕິບັດຫຼາຍກວ່າໝູ່ ເຊິ່ງມີຄ່າສະເລ່ຍເທົ່າກັບ ( $\overline{X}$ =4.29); ຄ່າຜັນປ່ຽນມາດຖານເທົ່າກັບ (S.D=0.61), ຮອງລົງມາຕາມລຳດັບແມ່ນ ຄູແຕ່ງຕົວສຸພາບຮຽບຮ້ອຍໃນເວລາສອນ ມີການປະຕິບັດຫຼາຍ ເຊິ່ງມີຄ່າສະເລ່ຍເທົ່າກັບ ( $\overline{X}$ =4.15); ຄ່າຜັນປ່ຽນມາດຖານເທົ່າກັບ (S.D=0.47), ຄູມີອາລົມຈິດສົດຊື່ນແຈ່ມໃສມີການປະຕິບັດຫຼາຍ ເຊິ່ງມີຄ່າສະເລ່ຍ ເທົ່າກັບ ( $\overline{X}$ =3.68); ຄ່າຜັນປ່ຽນມາດຖານເທົ່າກັບ (S.D=0.62), ຄູເປັນກັນເອງກັບນັກຮຽນ ມີການປະຕິບັດປານກາງ ເຊິ່ງມີຄ່າສະເລ່ຍເທົ່າກັບ ( $\overline{X}$ =3.48); ຄ່າຜັນປ່ຽນມາດຖານເທົ່າກັບ (S.D=0.67) ແລະ ຄູໃຫ້ຄວາມສົນໃຈເປັນທ່ວງເປັນໄຍກັບນັກຮຽນທຸກຄົນ ມີການປະຕິບັດປານກາງ ເຊິ່ງມີຄ່າສະເລ່ຍເທົ່າກັບ ( $\overline{X}$ =3.44); ຄ່າຜັນປ່ຽນມາດຖານເທົ່າກັບ (S.D=0.66).

2. ດ້ານການໃຊ້ຄຳຖາມ ໂດຍລວມພົບວ່າຢູ່ໃນລະດັບການປະຕິບັດຫຼາຍ ເຊິ່ງມີຄ່າສະເລ່ຍເທົ່າກັບ ( $\overline{X}$ =3.99); ຄ່າຜັນປ່ຽນມາດຖານເທົ່າກັບ (S.D=0.56). ຖ້າຈຳແນກເປັນແຕ່ລະສະມັດຖະພາພົບວ່າຄູຕັ້ງຄຳຖາມສອດຄ່ອງກັບເນື້ອໃນບົດຮຽນທີ່ສອນມີການປະຕິບັດຫຼາຍກວ່າໝູ່ ເຊິ່ງມີຄ່າສະເລ່ຍເທົ່າກັບ ( $\overline{X}$ =4.39); ຄ່າຜັນປ່ຽນມາດຖານເທົ່າກັບ (S.D=0.65), ຮອງລົງມາຕາມລຳດັບແມ່ນ ຄູໃຫ້ໂອກາດນັກຮຽນທຸກຄົນຕອບຄຳຖາມມີການປະຕິບັດຫຼາຍ ເຊິ່ງມີຄ່າສະເລ່ຍເທົ່າກັບ ( $\overline{X}$ =4.34); ຄ່າຜັນປ່ຽນມາດຖານເທົ່າກັບ 0.63 (S.D=0.63), ໃຊ້ຄຳຖາມຫຼາຍລະດັບຖາມນັກຮຽນ ມີການປະຕິບັດຫຼາຍ ເຊິ່ງມີຄ່າສະເລ່ຍ ເທົ່າກັບ ( $\overline{X}$ =4.19); ຄ່າຜັນປ່ຽນມາດຖານເທົ່າກັບ (S.D=0.53), ຄູໃຊ້ຄຳເວົ້າທີ່ເຂົ້າໃຈງ່າຍ ເຊິ່ງມີຄ່າສະເລ່ຍເທົ່າກັບ ( $\overline{X}$ =3.97); ຄ່າຜັນປ່ຽນມາດຖານເທົ່າກັບ (S.D=0.22), ຄູໃຫ້ຄວາມສົນໃຈເປັນຫ່ວງເປັນໄຍກັບນັກຮຽນທຸກຄົນຄູໃຊ້ຄຳຖາມຫຼາຍປະເພດມີການປະຕິບັດຫຼາຍ ເຊິ່ງມີຄ່າສະເລ່ຍເທົ່າກັບ 3.58 ( $\overline{X}$ = 3.58); ຄ່າຜັນປ່ຽນມາດຖານເທົ່າກັບ (S.D=0.66) ແລະ ຄູໃຊ້ຄຳຖາມຕິດພັນກັບຊີວິດປະຈຳວັນຂອງນັກຮຽນມີການປະຕິບັດປານກາງ ເຊິ່ງມີຄ່າສະເລ່ຍເທົ່າກັບ ( $\overline{X}$ =3.47); ຄ່າຜັນປ່ຽນມາດຖານເທົ່າກັບ (S.D=0.66).

3. ດ້ານການອະທິບາຍ ແລະ ເລົ່າເລື່ອງ ໂດຍລວມພົບວ່າ ຢູ່ໃນລະດັບການປະຕິບັດຫຼາຍ ເຊິ່ງມີຄ່າສະເລ່ຍເທົ່າກັບ ( $\overline{X}$ =3.91); ຄ່າຜັນປ່ຽນມາດຖານເທົ່າກັບ (S.D=0.63). ຖ້າຈຳແນກເປັນແຕ່ລະສະມັດຖະພາບ ພົບຄູໃຊ້ກິລິຍາທ່າທາງປະກອບໃນການອະທິບາຍບົດຮຽນ ຫຼື ເລົ່າເລື່ອງ ມີການປະຕິບັດຫຼາຍກວ່າໝູ່ ເຊິ່ງມີຄ່າສະເລ່ຍເທົ່າກັບ ( $\overline{X}$ =4.51); ຄ່າຜັນປ່ຽນມາດຖານເທົ່າກັບ (S.D=0.67), ຮອງລົງມາຕາມລຳດັບແມ່ນ ຄູໃຊ້ສຽງດັງຊັດເຈນໃນການອະທິບາຍບົດຮຽນ ຫຼື ເລົ່າເລື່ອງ ມີການປະຕິບັດຫຼາຍ ເຊິ່ງມີຄ່າສະເລ່ຍເທົ່າກັບ ( $\overline{X}$ =4.34); ຄ່າຜັນປ່ຽນມາດຖານເທົ່າກັບ (S.D=0.56), ຄູໃຊ້ຄຳເວົ້າໃນການອະທິບາຍບົດຮຽນ ຫຼື ເລົ່າເລື່ອງເໝາະສົມກັບນັກຮຽນ ມີການປະຕິບັດຫຼາຍ ເຊິ່ງມີຄ່າສະເລ່ຍ ເທົ່າກັບ ( $\overline{X}$ =3.77); ຄ່າຜັນ

ປ່ຽນມາດຖານເທົ່າກັບ (S.D=0.67), ຄູໃຊ້ເວລາໃນການອະທິບາຍບົດຮຽນ ຫຼື ເລົ່າເລື່ອງມີຄວາມເໝາະສົມ ເຊິ່ງມີຄ່າສະເລ່ຍເທົ່າກັບ ( $\overline{X}$=3.72); ຄ່າຜັນປ່ຽນມາດຖານເທົ່າກັບ (S.D=0.60), ຄູອະທິບາຍບົດຮຽນ ຫຼື ເລົ່າເລື່ອງເໝາະສົມກັບໄວອາຍຸ ມີການປະຕິບັດຫຼາຍ ເຊິ່ງມີຄ່າສະເລ່ຍເທົ່າກັບ ( $\overline{X}$= 3.68); ຄ່າຜັນປ່ຽນມາດຖານເທົ່າກັບ (S.D=0.62) ແລະ ຄູອະທິບາຍບົດຮຽນ ຫຼື ເລົ່າເລື່ອງແທດເໝາະກັບຊີວິດປະຈຳວັນຂອງນັກຮຽນ ມີການປະຕິບັດປານກາງ ເຊິ່ງມີຄ່າສະເລ່ຍເທົ່າກັບ 3.42 ( $\overline{X}$= 3.42); ຄ່າຜັນປ່ຽນມາດຖານເທົ່າກັບ (S.D=0.66).

4. ດ້ານການໃຊ້ສື່ການສອນ ໂດຍລວມພົບວ່າ ຢູ່ໃນລະດັບການປະຕິບັດປານກາງ ເຊິ່ງມີຄ່າສະເລ່ຍເທົ່າກັບ ( $\overline{X}$= 3.46); ຄ່າຜັນປ່ຽນມາດຖານເທົ່າກັບ (S.D=0.66). ຖ້າຈຳແນກເປັນແຕ່ລະສະມັດຖະພາບ ພົບວ່າ ຄູນຳໃຊ້ສື່ທີ່ມີຂະ ໜາດເໝາະສົມ ແລະ ມີຄວາມປອດໄພກັບຜູ້ຮຽນມີການປະຕິບັດຫຼາຍກວ່າໝູ່ ເຊິ່ງມີຄ່າສະເລ່ຍເທົ່າກັບ ( $\overline{X}$=3.51); ຄ່າຜັນປ່ຽນມາດຖານເທົ່າກັບ (S.D=0.67), ຮອງລົງມາຕາມລຳດັບແມ່ນ ຄູນຳໃຊ້ສື່ທີ່ມີສີສັນເປັນທີ່ຈັບໃຈ ແລະ ດຶງດູດຜູ້ຮຽນ ມີການປະຕິບັດປານກາງ ເຊິ່ງມີຄ່າສະເລ່ຍເທົ່າກັບ ( $\overline{X}$=3.49); ຄ່າຜັນປ່ຽນມາດຖານເທົ່າກັບ (S.D=0.67), ຄູສາມາດນຳໃຊ້ສື່ຕາມລຳດັບຂອງເນື້ອໃນບົດສອນ ມີການປະຕິບັດປານກາງ ເຊິ່ງມີຄ່າສະເລ່ຍເທົ່າກັບ ( $\overline{X}$=3.48); ຄ່າຜັນປ່ຽນມາດຖານເທົ່າກັບ (S.D=0.67), ຄູໃຊ້ສື່ເຂົ້າໃນການສະຫຼຸບບົດຮຽນ ມີການປະຕິບັດປານກາງ ເຊິ່ງມີຄ່າສະເລ່ຍເທົ່າກັບ ( $\overline{X}$=3.47); ຄ່າຜັນປ່ຽນມາດຖານເທົ່າກັບ (S.D=0.66), ຄູມີຄວາມຄ່ອງແຄ່ວໃນການນຳໃຊ້ສື່ເຂົ້າໃນການສອນ ມີການປະຕິບັດປານກາງ ເຊິ່ງມີຄ່າສະເລ່ຍເທົ່າກັບ ( $\overline{X}$=3.44); ຄ່າຜັນປ່ຽນມາດຖານເທົ່າກັບ (S.D=0.66) ແລະ ຄູໃຊ້ສື່ທີ່ຫຼາກຫຼາຍເຂົ້າໃນການສອນ ມີການປະຕິບັດປານກາງ ເຊິ່ງມີຄ່າສະເລ່ຍເທົ່າກັບ ( $\overline{X}$=3.39); ຄ່າຜັນປ່ຽນມາດຖານເທົ່າກັບ (S.D=0.65).

5. ດ້ານການກະຕຸ້ນຄວາມສົນໃຈ ໂດຍລວມພົບວ່າ ຢູ່ໃນລະດັບການປະຕິບັດຫຼາຍ ເຊິ່ງມີຄ່າສະເລ່ຍເທົ່າກັບ ( $\overline{X}$= 3.87); ຄ່າຜັນປ່ຽນມາດຖານເທົ່າກັບ (S.D=0.63). ຖ້າຈຳແນກເປັນແຕ່ລະສະມັດຖະພາບ ພົບວ່າ ຄູໃຊ້ຖ້ອຍຄຳ, ນ້ຳສຽງຈະແຈ້ງ, ຊັດເຈນເໝາະສົມກັບນັກຮຽນ ມີການປະຕິບັດຫຼາຍກວ່າໝູ່ ເຊິ່ງມີຄ່າສະເລ່ຍເທົ່າກັບ ( $\overline{X}$=4.44); ຄ່າຜັນປ່ຽນມາດຖານເທົ່າກັບ (S.D=0.66), ຮອງລົງມາຕາມລຳດັບແມ່ນ ຄູໃຊ້ສາຍຕາ, ສີໜ້າ ແລະ ທ່າທາງປະກອບໃນການສອນ ມີການປະຕິບັດຫຼາຍ ເຊິ່ງມີຄ່າສະເລ່ຍເທົ່າກັບ ( $\overline{X}$=4.33); ຄ່າຜັນປ່ຽນມາດຖານເທົ່າກັບ (S.D=0.63), ຄູມີວິທີການສອນຫຼາຍຮູບແບບ ມີການປະຕິບັດຫຼາຍ ເຊິ່ງມີຄ່າສະເລ່ຍ ເທົ່າກັບ ( $\overline{X}$= 3.76); ຄ່າຜັນປ່ຽນມາດຖານເທົ່າກັບ (S.D=0.57), ຄູເລີ່ມຕົ້ນເລື່ອງ ທີ່ກ່ຽວຂ້ອງກັບເນື້ອໃນບົດຮຽນ ມີການປະຕິບັດຫຼາຍ ເຊິ່ງມີຄ່າສະເລ່ຍເທົ່າກັບ ( $\overline{X}$=3.71); ຄ່າຜັນປ່ຽນມາດຖານເທົ່າກັບ (S.D=0.61), ຄູມີຄວາມຮູ້ກ່ຽວກັບເນື້ອໃນບົດຮຽນທີ່ສອນ ມີການປະຕິບັດປານກາງ ເຊິ່ງມີຄ່າສະເລ່ຍເທົ່າກັບ ( $\overline{X}$=3.48); ຄ່າຜັນປ່ຽນມາດຖານເທົ່າກັບ (S.D=0.67) ແລະ ການນຳໃຊ້ເວລາເໝາະສົມກັບເນື້ອໃນບົດສອນ ມີການປະຕິບັດປານກາງ ເຊິ່ງມີຄ່າສະເລ່ຍເທົ່າກັບ ( $\overline{X}$=3.47); ຄ່າຜັນປ່ຽນມາດຖານເທົ່າກັບ (S.D=0.66).

6. ດ້ານການຄວບຄຸມຫ້ອງ ໂດຍລວມພົບວ່າ ຢູ່ໃນລະດັບການປະຕິບັດຫຼາຍ ເຊິ່ງມີຄ່າສະເລ່ຍເທົ່າກັບ ( $\overline{X}$= 3.91); ຄ່າຜັນປ່ຽນມາດຖານເທົ່າກັບ (S.D=0.51). ຖ້າຈຳແນກເປັນແຕ່ລະສະມັດຖະພາບ ພົບວ່າ ຄູສັງເກດນັກຮຽນທົ່ວຫ້ອງຮຽນຢ່າງເໝາະສົມ ມີການປະຕິບັດຫຼາຍກວ່າໝູ່ ເຊິ່ງມີຄ່າສະເລ່ຍເທົ່າກັບ ( $\overline{X}$=4.22); ຄ່າຜັນປ່ຽນມາດຖານເທົ່າກັບ (S.D=0.55), ຮອງລົງມາຕາມລຳດັບແມ່ນ ຄູແນະນຳການແຕ່ງກາຍຂອງນັກຮຽນໃນຫ້ອງຮຽນ ມີການປະຕິບັດຫຼາຍ ເຊິ່ງມີຄ່າສະເລ່ຍເທົ່າກັບ ( $\overline{X}$=4.16); ຄ່າຜັນປ່ຽນມາດຖານເທົ່າກັບ 0.48 (S.D=0.48), ຄູກວດກາຈຳນວນພົນກ່ອນການສອນ ມີການປະຕິບັດຫຼາຍ ເຊິ່ງມີຄ່າສະເລ່ຍ ເທົ່າກັບ ( $\overline{X}$=3.90); ຄ່າຜັນປ່ຽນມາດຖານເທົ່າກັບ (S.D=0.39), ຄູກວດລະບຽບຂອງນັກຮຽນ ມີການປະຕິບັດຫຼາຍ ເຊິ່ງມີຄ່າສະເລ່ຍເທົ່າກັບ ( $\overline{X}$= 3.88); ຄ່າຜັນປ່ຽນມາດຖານເທົ່າກັບ (S.D=0.43), ຄູຕັກເຕືອນນັກຮຽນທີ່ມີພຶດຕິກຳທີ່ບໍ່ດີ ມີການປະຕິບັດປານກາງ ເຊິ່ງມີຄ່າສະເລ່ຍເທົ່າກັບ ( $\overline{X}$=3.81); ຄ່າຜັນປ່ຽນມາດຖານເທົ່າກັບ (S.D=0.53) ແລະ ຄູມີການວາງມາດຕະການ ຫຼື ລະບຽບໃນຫ້ອງຮຽນພາຍໃນຊົ່ວໂມງສອນ ມີການປະຕິບັດປານກາງ ເຊິ່ງມີຄ່າສະເລ່ຍເທົ່າກັບ ( $\overline{X}$=3.47); ຄ່າຜັນປ່ຽນມາດຖານເທົ່າກັບ (S.D=0.66).

7. ດ້ານການເສີມກຳລັງໃຈ ໂດຍລວມພົບວ່າ ຢູ່ໃນລະດັບການປະຕິບັດຫຼາຍ ເຊິ່ງມີຄ່າສະເລ່ຍເທົ່າກັບ ( $\overline{X}$= 4.16); ຄ່າຜັນປ່ຽນມາດຖານເທົ່າກັບ (S.D=0.58). ຖ້າຈຳແນກເປັນແຕ່ລະສະມັດຖະພາບ ພົບວ່າ ຄູໃຫ້ນັກຮຽນຕົບມືຊົມເຊີຍເຊິ່ງກັນ ແລະ ກັນ ມີການປະຕິບັດຫຼາຍ ເຊິ່ງມີຄ່າສະເລ່ຍເທົ່າກັບ ( $\overline{X}$=4.33); ຄ່າຜັນປ່ຽນມາດຖານເທົ່າກັບ (S.D=0.63), ຮອງລົງມາຕາມລຳດັບແມ່ນ ຄູເວົ້າຈາໃຫ້ກຳລັງໃຈແກ່ນັກຮຽນເຊັ່ນ: ດີຫຼາຍ, ດີ, ໃຊ້ໄດ້,... ມີການປະຕິບັດຫຼາຍກວ່າໝູ່ ເຊິ່ງມີຄ່າສະເລ່ຍເທົ່າກັບ ( $\overline{X}$=4.27); ຄ່າຜັນປ່ຽນມາດຖານເທົ່າກັບ (S.D=0.59), ຄູສະແດງທ່າທາງ, ນ້ຳສຽງທີ່ເປັນມິດ ແລະ ຈິງໃຈໃຫ້ແກ່ນັກຮຽນທຸກຄົນໃນຫ້ອງຮຽນ ມີການປະຕິບັດຫຼາຍ ເຊິ່ງມີຄ່າສະເລ່ຍ ເທົ່າກັບ ( $\overline{X}$=4.23); ຄ່າຜັນປ່ຽນມາດຖານເທົ່າກັບ (S.D=0.56), ຄູຊົມເຊີຍຄຳຕອບທີ່ນັກຮຽນຕອບຖືກ ມີການປະຕິບັດຫຼາຍ ເຊິ່ງມີຄ່າສະເລ່ຍເທົ່າກັບ ( $\overline{X}$=4.21); ຄ່າຜັນປ່ຽນມາດຖານເທົ່າກັບ (S.D=0.55), ຄູໃຫ້ຄວາມສົນໃຈໃນ

ການເຮັດກິດຈະກຳຂອງນັກຮຽນໝົດທຸກຄົນໃນຫ້ອງຮຽນ ມີການປະຕິບັດຫຼາຍ ເຊິ່ງມີຄ່າສະເລ່ຍເທົ່າກັບ ( $\overline{X}$=4.20); ຄ່າຜັນປ່ຽນມາດຖານເທົ່າກັບ (S.D=0.54) ແລະ ຄູໃຫ້ລາງວັນແກ່ນັກຮຽນເຊັ່ນ: ຄະແນນ, ຂອງຂັວນ,... ມີການປະຕິບັດຫຼາຍ ເຊິ່ງມີຄ່າສະເລ່ຍເທົ່າກັບ ( $\overline{X}$=3.68); ຄ່າຜັນປ່ຽນມາດຖານເທົ່າກັບ (S.D=0.62).

8. ການວິເຄາະຂໍ້ມູນ ກ່ຽວກັບສະມັດຖະພາບການສອນຂອງນັກສຶກສາ ສາຂາຄູພູມສາດ ທີ່ເຝິກຫັດການສອນໃນດ້ານການສະຫຼຸບບົດຮຽນ ໂດຍລວມພົບວ່າ ຢູ່ໃນລະດັບການປະຕິບັດຫຼາຍ ເຊິ່ງມີຄ່າສະເລ່ຍເທົ່າກັບ ( $\overline{X}$=3.64); ຄ່າຜັນປ່ຽນມາດຖານເທົ່າກັບ (S.D=0.62). ຖ້າຈຳແນກເປັນແຕ່ລະສະມັດຖະພາບ ພົບວ່າ ຄູສະຫຼຸບບົດຮຽນໄປແຕ່ລະຫົວຂໍ້ຂອງບົດຮຽນ ມີການປະຕິບັດຫຼາຍກວ່າໝູ່ ເຊິ່ງມີຄ່າສະເລ່ຍເທົ່າກັບ ( $\overline{X}$=3.87); ຄ່າຜັນປ່ຽນມາດຖານເທົ່າກັບ (S.D=0.71), ຮອງລົງມາຕາມລຳດັບແມ່ນ ຄູໃຊ້ຄຳສັບທີ່ເຂົ້າໃຈງ່າຍໃນການສະຫຼຸບບົດຮຽນ ມີການປະຕິບັດຫຼາຍ ເຊິ່ງມີຄ່າສະເລ່ຍເທົ່າກັບ ( $\overline{X}$= 3.86); ຄ່າຜັນປ່ຽນມາດຖານເທົ່າກັບ (S.D=0.46), ຄູສະຫຼຸບບົດຮຽນແຕ່ລະກິດຈະກຳ ມີການປະຕິບັດຫຼາຍ ເຊິ່ງມີຄ່າສະເລ່ຍເທົ່າກັບ ( $\overline{X}$=3.76); ຄ່າຜັນປ່ຽນມາດຖານເທົ່າກັບ 0.57 (S.D=0.57), ຄູໃຊ້ສື່ການສອນເຂົ້າໃນການສະຫຼຸບບົດຮຽນ ມີການປະຕິບັດປານກາງ ເຊິ່ງມີຄ່າສະເລ່ຍເທົ່າກັບ 3.48 ( $\overline{X}$= 3.48); ຄ່າຜັນປ່ຽນມາດຖານເທົ່າກັບ (S.D=0.67), ຄູໃຫ້ນັກຮຽນມີສ່ວນຮ່ວມໃນການສະຫຼຸບບົດຮຽນ ມີການປະຕິບັດປານກາງ ເຊິ່ງມີຄ່າສະເລ່ຍເທົ່າກັບ ( $\overline{X}$=3.44); ຄ່າຜັນປ່ຽນມາດຖານເທົ່າກັບ (S.D=0.66) ແລະ ຄູສະຫຼຸບບົດຮຽນໂດຍການໃຊ້ແຜນວາດຊ່ວຍຈື່ ມີການປະຕິບັດປານກາງ ເຊິ່ງມີຄ່າສະເລ່ຍເທົ່າກັບ ( $\overline{X}$=3.43); ຄ່າຜັນປ່ຽນມາດຖານເທົ່າກັບ (S.D=0.66)

9. ການວິເຄາະຂໍ້ມູນ ກ່ຽວກັບສະມັດຖະພາບການສອນຂອງນັກສຶກສາ ສາຂາຄູພູມສາດ ທີ່ເຝິກຫັດການສອນໃນດ້ານການປະເມີນ ໂດຍລວມພົບວ່າ ຢູ່ໃນລະດັບການປະຕິບັດຫຼາຍ ເຊິ່ງມີຄ່າສະເລ່ຍເທົ່າກັບ ( $\overline{X}$=3.64); ຄ່າຜັນປ່ຽນມາດຖານເທົ່າກັບ (S.D=0.68). ຖ້າຈຳແນກເປັນແຕ່ລະສະມັດຖະພາບ ພົບວ່າ ຄູມີການປະເມີນລາຍບຸກຄົນ ແລະ ກຸ່ມມີການປະຕິບັດຫຼາຍກວ່າໝູ່ ເຊິ່ງມີຄ່າສະເລ່ຍເທົ່າກັບ ( $\overline{X}$= 3.90); ຄ່າຜັນປ່ຽນມາດຖານເທົ່າກັບ (S.D=0.73), ຮອງລົງມາຕາມລຳດັບແມ່ນ ຄູປະເມີນຫຼັງການສອນ ມີການປະຕິບັດຫຼາຍ ເຊິ່ງມີຄ່າສະເລ່ຍເທົ່າກັບ ( $\overline{X}$=3.87); ຄ່າຜັນປ່ຽນມາດຖານເທົ່າກັບ (S.D=0.71), ຄູປະເມີນກ່ອນການການສອນ ມີການປະຕິບັດຫຼາຍ ເຊິ່ງມີຄ່າສະເລ່ຍ ເທົ່າກັບ ( $\overline{X}$=3.53); ຄ່າຜັນປ່ຽນມາດຖານເທົ່າກັບ (S.D=0.66), ຄູປະເມີນໃນເວລາດຳເນີນການສອນ ມີການປະຕິບັດປານກາງ ເຊິ່ງມີຄ່າສະເລ່ຍເທົ່າກັບ ( $\overline{X}$=3.47); ຄ່າຜັນປ່ຽນມາດຖານເທົ່າກັບ (S.D=0.66), ຄູສະຫຼຸບການປະເມີນໂດຍຖືເອົາແນວຄິດຂອງນັກຮຽນເປັນຫຼັກ ມີການປະຕິບັດປານກາງ ເຊິ່ງມີຄ່າສະເລ່ຍເທົ່າກັບ ( $\overline{X}$=3.41); ຄ່າຜັນປ່ຽນມາດຖານເທົ່າກັບ (S.D=0.65) ແລະ ຄູນຳໃຊ້ຜົນການປະເມີນເພື່ອຊ່ວຍເຫຼືອນັກຮຽນ ມີການປະຕິບັດປານກາງ ເຊິ່ງມີຄ່າສະເລ່ຍເທົ່າກັບ ( $\overline{X}$=3.39); ຄ່າຜັນປ່ຽນມາດຖານເທົ່າກັບ (S.D=0.65).

## 5. ອະພິປາຍຜົນ

ຈາກການສະຫຼຸບຜົນການວິໄຈກ່ຽວກັບສະມັດຖະພາບການສອນຂອງນັກສຶກສາ ໃນແຕ່ລະດ້ານ ພົບວ່າ ດ້ານການໃຊ້ອາຈາກິລິຍາທ່າທາງ, ດ້ານການໃຊ້ຄຳຖາມ, ດ້ານການອະທິບາຍ ແລະ ເລົ່າເລື່ອງ, ດ້ານການໃຊ້ສື່ການສອນ, ດ້ານການກະຕຸ້ນຄວາມສົນໃຈ, ດ້ານການຄວບຄຸມຫ້ອງ, ດ້ານການເສີມກຳລັງໃຈ, ດ້ານການສະຫຼຸບບົດຮຽນ ແລະ ດ້ານການປະເມີນ ໂດຍລວມແມ່ນ ນອນຢູ່ໃນລະດັບປະຕິບັດຫຼາຍ. ເຊິ່ງສະແດງໃຫ້ເຫັນວ່ານັກສຶກສາຄູ ແມ່ນໄດ້ນຳໃຊ້ທັກສະທັງ ໙ ດ້ານເຂົ້າໃນການຮຽນ - ການສອນໃນ ລາຍວິຊາທີ່ສອນໂດຍສະເພາະວິຊາພູມສາດໃນຊັ້ນມັດທະຍົມຕົ້ນສາທິດ. ທັກສະດັ່ງກ່າວໄດ້ສ້າງຄວາມສາມາດ ແລະ ເສີມສ້າງທັກສະການສອນໃຫ້ມີຄວາມຊຳນານໃນການສອນຕົວຈິງ. ໃນນັ້ນຜົນຂອງການວິໄຈໃນແຕ່ລະດ້ານມີດັ່ງນີ້:

1. ດ້ານການໃຊ້ອາຈາກິລິຍາທ່າທາງ: ຄວາມຄິດເຫັນຂອງຜູ້ບໍລິຫານ, ຄູສອນ ແລະ ນັກຮຽນ ກ່ຽວກັບສະມັດຖະພາບການສອນຂອງນັກສຶກສາ ສາຂາຄູພູມສາດທີ່ເຝິກຫັດການສອນຢູ່ໂຮງຮຽນມັດທະຍົມຕົ້ນສາທິດ ໃນດ້ານການໃຊ້ອາຈາກິລິຍາທ່າທາງ ໂດຍລວມ ພົບວ່າ ຄວາມຄິດເຫັນນອນໃນລະດັບປະຕິບັດຫຼາຍ ມີຄ່າສະເລ່ຍເທົ່າກັບ 3.78. ເຊິ່ງຜົນຂອງຄວາມຄິດເຫັນດັ່ງກ່າວມັນສະແດງໃຫ້ເຫັນວ່າ ນັກສຶກສາຄູພູມສາດທີ່ໄດ້ລົງເຝິກຫັດການສອນແມ່ນໄດ້ຜ່ານການສຶກສາຮ່ຳຮຽນທາງດ້ານທິດສະດີ ແລະ ປະຕິບັດຕົວຈິງກ່ຽວກັບລະບຽບວິໄນຂອງນັກສຶກສາຄູ ແລະ ມາດຖານຂອງຄວາມເປັນຄູ ຕາມເນື້ອໃນ ຄຸນສົມບັດ ແລະ ຈັນຍາບັນຂອງຄູລາວ ໂດຍສະເພາະ ໃນການປະພຶດຕົນ, ການແຕ່ງກາຍ, ການເວົ້າຈາ ລວມໄປເຖິງ ກິລິຍາມາລະຍາດຕ່າງໆ. ສະນັ້ນ, ເມື່ອນຳໄປປະຕິບັດຕົວຈິງມັນຈຶ່ງມີການປະຕິບັດໄດ້ໃນລະດັບຫຼາຍ.

2. ດ້ານການໃຊ້ ຄຳຖາມ: ຄວາມຄິດເຫັນຂອງຜູ້ບໍລິຫານ, ຄູສອນ ແລະ ນັກຮຽນ ກ່ຽວກັບສະມັດຖະພາບການສອນຂອງຂອງນັກສຶກສາ ສາຂາຄູພູມສາດທີ່ເຝິກຫັດການສອນຢູ່ໂຮງຮຽນມັດທະຍົມຕົ້ນສາທິດ ໃນດ້ານການໃຊ້ ຄຳຖາມ ໂດຍລວມ ພົບວ່າ ຄວາມຄິດເຫັນນອນໃນລະດັບປະຕິບັດຫຼາຍ ມີຄ່າສະເລ່ຍເທົ່າກັບ 3.99. ເຊິ່ງຜົນຂອງຄວາມຄິດເຫັນດັ່ງກ່າວມັນສະແດງໃຫ້ເຫັນວ່າ ນັກສຶກສາຄູພູມສາດທີ່ໄດ້ລົງເຝິກຫັດການສອນແມ່ນມີທັກສະໃນການຕັ້ງຄຳຖາມ ແລະ ປະຕິບັດໄປຕາມທັກສະໃນການຖາມຕາມຂອບເຂດຂອງເນື້ອໃນບົດຮຽນທີ່ສອນ, ຈາກຄຳຖາມທີ່ງ່າຍດາຍໄປຫາຄຳຖາມທີ່ຍາກ, ຄຳຖາມທີ່

ສະເພາະເຈາະຈົງ, ຈະແຈ້ງ ແລະ ເຂົ້າໃຈງ່າຍ ແລະ ເໝາະສົມກັບເກນອາຍຸ ແລະ ຄວາມສາມາດຂອງນັກຮຽນ.

3. ດ້ານການອະທິບາຍ ແລະ ເລົ່າເລື່ອງ: ຄວາມຄິດເຫັນຂອງຜູ້ບໍລິຫານ, ຄູສອນ ແລະ ນັກຮຽນ ກ່ຽວກັບສະມັດຖະພາບການສອນຂອງຂອງນັກສຶກສາ ສາຂາຄູພູມສາດທີ່ເຝິກຫັດການສອນຢູ່ໂຮງຮຽນມັດທະຍົມຕົ້ນສາທິດ ໃນ ດ້ານການອະທິບາຍ ແລະ ເລົ່າເລື່ອງ ໂດຍລວມ ພົບວ່າ ຄວາມຄິດເຫັນນອນໃນລະດັບປະຕິບັດຫຼາຍ ມີຄ່າສະເລ່ຍເທົ່າກັບ 3.91. ເຊິ່ງຜົນຂອງຄວາມຄິດເຫັນດັ່ງກ່າວມັນສະແດງໃຫ້ເຫັນວ່າ ນັກສຶກສາຄູພູມສາດທີ່ໄດ້ລົງເຝິກຫັດການສອນແມ່ນມີທັກສະໃນການການອະທິບາຍ ແລະ ເລົ່າເລື່ອງ ທັງນີ້ແມ່ນຜົນຂອງການເຝິກຝົນຫຼໍ່ຫຼອມຕົນເອງໃນການສຶກສາຄົ້ນຄວ້າຮໍ່າຮຽນຕາມເອກະສານ, ຕໍາລາຕ່າງໆເຮັດໃຫ້ນັກສຶກສາມີຄວາມຮູ້, ຄວາມສາມາດ ແລະ ສາມາດກໍາເນື້ອໃນບົດຮຽນໄດ້ເຮັດໃຫ້ມີທັກສະໃນການອະທິບາຍ ແລະ ເລົ່າເລື່ອງກ່ຽວກັບເນື້ອໃນບົດຮຽນໄດ້ດີ. ເຊິ່ງການອະທິບາຍ ແລະ ເລົ່າເລື່ອງ ທີ່ມີຄວາຄ່ອງແຄ່ວ, ຈະແຈ້ງຈະເຮັດໃຫ້ຜູ້ຮຽນເຂົ້າໃຈງ່າຍ ແລະ ມີຄວາມກະຕືລືລົ້ນໃນການຮຽນຫຼາຍຂຶ້ນ.

4. ດ້ານການໃຊ້ສື່ການສອນ: ຄວາມຄິດເຫັນຂອງຜູ້ບໍລິຫານ, ຄູສອນ ແລະ ນັກຮຽນ ກ່ຽວກັບສະມັດຖະພາບການສອນຂອງຂອງນັກສຶກສາ ສາຂາຄູພູມສາດທີ່ເຝິກຫັດການສອນຢູ່ໂຮງຮຽນມັດທະຍົມຕົ້ນສາທິດ ໃນ ດ້ານການໃຊ້ສື່ການສອນ ໂດຍລວມ ພົບວ່າ ຄວາມຄິດເຫັນນອນໃນລະດັບປະຕິບັດປານກາງ ມີຄ່າສະເລ່ຍເທົ່າກັບ 3.46. ເຊິ່ງຜົນຂອງຄວາມຄິດເຫັນດັ່ງກ່າວມັນສະແດງໃຫ້ເຫັນວ່າ ນັກສຶກສາຄູພູມສາດທີ່ໄດ້ລົງເຝິກຫັດການສອນແມ່ນມີທັກສະໃນການ ການນໍາໃຊ້ສື່ໂດຍສະເພາະສື່ທີ່ມີຂະໜາດເໝາະສົມ ແລະ ມີຄວາມປອດໄພກັບຜູ້ຮຽນ ແຕ່ສື່ທີ່ເອົາມານໍາໃຊ້ຍັງບໍ່ຫຼາກຫຼາຍ ເຮັດໃຫ້ບາງເນື້ອໃນບົດຮຽນບໍ່ມີສື່ປະກອບເຂົ້າໃນການສອນ, ບໍ່ມີຮູບພາບປະຈັກຕາເຮັດໃຫ້ຜູ້ຮຽນມີຄວາມເຂົ້າໃຈຕໍ່ເນື້ອໃນບົດຮຽນບໍ່ຫຼາຍ.

5. ດ້ານການກະຕຸ້ນຄວາມສົນໃຈ: ຄວາມຄິດເຫັນຂອງຜູ້ບໍລິຫານ, ຄູສອນ ແລະ ນັກຮຽນ ກ່ຽວກັບສະມັດຖະພາບການສອນຂອງຂອງນັກສຶກສາ ສາຂາຄູພູມສາດທີ່ເຝິກຫັດການສອນຢູ່ໂຮງຮຽນມັດທະຍົມຕົ້ນສາທິດ ໃນ ດ້ານການກະຕຸ້ນຄວາມສົນໃຈ ໂດຍລວມ ພົບວ່າ ຄວາມຄິດເຫັນນອນໃນລະດັບປະຕິບັດຫຼາຍ ມີຄ່າສະເລ່ຍເທົ່າກັບ 3.87. ເຊິ່ງຜົນຂອງຄວາມຄິດເຫັນດັ່ງກ່າວມັນສະແດງໃຫ້ເຫັນວ່າ ນັກສຶກສາຄູພູມສາດທີ່ໄດ້ລົງເຝິກຫັດການສອນແມ່ນມີທັກສະໃນການ ການກະຕຸ້ນຄວາມສົນໃຈ ທັງນີ້ແມ່ນຜົນຂອງການ ຄູໃຊ້ຖ້ອຍຄໍາ, ນໍ້າສຽງ ຈະແຈ້ງ, ຊັດເຈນເໝາະສົມກັບນັກຮຽນ, ໃຊ້ສາຍຕາ, ສີໜ້າ ແລະ ທ່າທາງປະກອບໃນການສອນ, ສອນຫຼາຍຮູບແບບ ແລະ ກໍາເນື້ອໃນບົດຮຽນໄດ້ດີ ເຮັດໃຫ້ມີຄວາມຄ່ອງແຄ່ວໃນການສອນ ແລະ ເຮັດໃຫ້ຜູ້ຮຽໜມີຄວາມສົນໃຈໃນການຮຽນຫຼາຍຂຶ້ນ.

6. ດ້ານການຄວບຄຸມຫ້ອງ: ຄວາມຄິດເຫັນຂອງຜູ້ບໍລິຫານ, ຄູສອນ ແລະ ນັກຮຽນ ກ່ຽວກັບສະມັດຖະພາບການສອນຂອງຂອງນັກສຶກສາ ສາຂາຄູພູມສາດທີ່ເຝິກຫັດການສອນຢູ່ໂຮງຮຽນມັດທະຍົມຕົ້ນສາທິດ ໃນ ດ້ານການຄວບຄຸມຫ້ອງ ໂດຍລວມ ພົບວ່າ ຄວາມຄິດເຫັນນອນໃນລະດັບປະຕິບັດຫຼາຍ ມີຄ່າສະເລ່ຍເທົ່າກັບ 3.91. ເຊິ່ງຜົນຂອງຄວາມຄິດເຫັນດັ່ງກ່າວມັນສະແດງໃຫ້ເຫັນວ່າ ນັກສຶກສາຄູພູມສາດທີ່ໄດ້ລົງເຝິກຫັດການສອນແມ່ນມີທັກສະໃນການ ຄວບຄຸມຫ້ອງ ທັງນີ້ແມ່ນຜົນຂອງການສັງເກດນັກຮຽນທົ່ວຫ້ອງຮຽນຢ່າງເໝາະສົມ, ການແນະນໍານັກຮຽນໃນການແຕ່ງກາຍ ແລະ ການປະຕິບັດລະບຽບຂອງໂຮງຮຽນ ແລະ ຂອງຫ້ອງຮຽນໃຫ້ມີການປະຕິບັດຢ່າງເຂັ້ມງວດເຮັດໃຫ້ນັກຮຽນມີລະບຽບວິໄນ.

7. ດ້ານການເສີມກໍາລັງໃຈ: ຄວາມຄິດເຫັນຂອງຜູ້ບໍລິຫານ, ຄູສອນ ແລະ ນັກຮຽນ ກ່ຽວກັບສະມັດຖະພາບການສອນຂອງຂອງນັກສຶກສາ ສາຂາຄູພູມສາດທີ່ເຝິກຫັດການສອນຢູ່ໂຮງຮຽນມັດທະຍົມຕົ້ນສາທິດ ໃນ ດ້ານການເສີມກໍາລັງໃຈ ໂດຍລວມ ພົບວ່າ ຄວາມຄິດເຫັນນອນໃນລະດັບປະຕິບັດຫຼາຍ ມີຄ່າສະເລ່ຍເທົ່າກັບ 4.16. ເຊິ່ງຜົນຂອງຄວາມຄິດເຫັນດັ່ງກ່າວມັນສະແດງໃຫ້ເຫັນວ່າ ນັກສຶກສາຄູພູມສາດທີ່ໄດ້ລົງເຝິກຫັດການສອນແມ່ນມີທັກສະໃນການ ດ້ານການເສີມກໍາລັງໃຈ ທັງນີ້ແມ່ນຜົນຂອງການໃຊ້ທັກສະທີ່ໄດ້ຜ່ານການເຝິກຝົນມາເປັນຕົ້ນແມ່ນໃຫ້ນັກຮຽນຕົບມືຊົມເຊີຍເຊິ່ງກັນ ແລະ ກັນ, ເວົ້າຈາໃຫ້ກໍາລັງໃຈແກ່ນັກຮຽນເຊັ່ນ: ດີຫຼາຍ, ດີ, ໃຊ້ໄດ້, ສະແດງທ່າທາງ, ນໍ້າສຽງທີ່ເປັນມິດ ແລະ ຈິງໃຈໃຫ້ແກ່ນັກຮຽນທຸກຄົນໃນຫ້ອງຮຽນລວມໄປເຖິງການ ຊົມເຊີຍ ແລະ ການໃຫ້ລາງວັນຕ່າງໆເຊິ່ງທັກສະດັ່ງກ່າວໄດ້ສ້າງໃຫ້ຜູ້ຮຽນມີຄວາມສົນໃຈໃນການຮຽນໃນວິຊາພູມສາດຫຼາຍຂຶ້ນ.

8. ດ້ານການສະຫຼຸບບົດຮຽນ: ຄວາມຄິດເຫັນຂອງຜູ້ບໍລິຫານ, ຄູສອນ ແລະ ນັກຮຽນ ກ່ຽວກັບສະມັດຖະພາບການສອນຂອງຂອງນັກສຶກສາ ສາຂາຄູພູມສາດທີ່ເຝິກຫັດການສອນຢູ່ໂຮງຮຽນມັດທະຍົມຕົ້ນສາທິດ ໃນ ດ້ານການສະຫຼຸບບົດຮຽນ ໂດຍລວມ ພົບວ່າ ຄວາມຄິດເຫັນນອນໃນລະດັບປະຕິບັດຫຼາຍ ມີຄ່າສະເລ່ຍເທົ່າກັບ 3.64. ເຊິ່ງຜົນຂອງຄວາມຄິດເຫັນດັ່ງກ່າວມັນສະແດງໃຫ້ເຫັນວ່າ ນັກສຶກສາຄູພູມສາດທີ່ໄດ້ລົງເຝິກຫັດການສອນແມ່ນມີທັກສະໃນການ ດ້ານການສະຫຼຸບບົດຮຽນ ທັງນີ້ແມ່ນຜົນຂອງການໃຊ້ທັກສະທີ່ໄດ້ຜ່ານການເຝິກຝົນມາເປັນຕົ້ນແມ່ນໄດ້ສະຫຼຸບບົດຮຽນໄປແຕ່ລະຫົວຂໍ້ຂອງບົດຮຽນ, ໃຊ້ຄໍາສັບທີ່ເຂົ້າໃຈງ່າຍໃນການສະຫຼຸບບົດຮຽນ, ສະຫຼຸບບົດຮຽນແຕ່ລະກິດຈະກໍາ ເຊິ່ງທັກສະດັ່ງກ່າວໄດ້ເຮັດໃຫ້ຜູ້ຮຽນສາມາດຮູ້ ແລະ ເຂົ້າໃຈເນື້ອໃນບົດຮຽນຫຼາຍຂຶ້ນ.

9. ດ້ານການປະເມີນ: ຄວາມຄິດເຫັນຂອງຜູ້ບໍລິຫານ, ຄູສອນ ແລະ ນັກຮຽນ ກ່ຽວກັບສະມັດຖະພາບການສອນຂອງຂອງນັກສຶກສາ ສາຂາຄູພູມສາດທີ່ເຝິກຫັດການສອນຢູ່ໂຮງຮຽນມັດທະຍົມຕົ້ນສາທິດ ໃນ ດ້ານການປະເມີນ ໂດຍລວມ ພົບວ່າ ຄວາມຄິດເຫັນນອນໃນລະດັບປະຕິບັດຫຼາຍ ມີຄ່າສະເລ່ຍເທົ່າກັບ 3.64. ເຊິ່ງຜົນຂອງຄວາມຄິດເຫັນດັ່ງກ່າວມັນສະແດງໃຫ້ເຫັນວ່າ ນັກສຶກສາຄູພູມສາດທີ່ໄດ້ລົງເຝິກຫັດການສອນແມ່ນມີທັກສະໃນດ້ານການປະເມີນ ທັງນີ້ແມ່ນຜົນຂອງການໃຊ້ທັກສະທີ່ໄດ້ຜ່ານການເຝິກຝົນມາເປັນຕົ້ນແມ່ນໄດ້ປະເມີນຜົນການຮຽໜຂອງ

ນັກຮຽນປະເມີນໄປເປັນລາຍບຸກຄົນ ແລະ ກຸ່ມ, ປະເມີນກ່ອນການສອນ ແລະ ປະເມີນຫຼັງການສອນ ເຊິ່ງສາມາດຮູ້ໄດ້ວ່າລະດັບຄວາມຮູ້ຄວາມສາມາດຂອງຜູ້ຮຽນມີຄວາມຄວາມເຂົ້າໃຈຕໍ່າກັບເນື້ອໃນບົດຮຽນທີ່ຮຽນມາໄດ້ໜ້ອຍຫຼາຍພຽງໃດ ແລະ ຈະເຮັດວິທີໃດເພື່ອສົ່ງເສີມ ແລະ ແກ້ໄຂບັນຫາດັ່ງກ່າວເພື່ອໃຫ້ຜູ້ຮຽນໄດ້ປະໂຫຍດສູງສຸດ.

ຈາກຜົນການອະພິປາຍຂ້າງເທິງມັນໄດ້ສອດຄ່ອງກັບການສຶກສາຂອງ ທີມງານວິໄຈ ວິທະຍາໄລຄູປາກເຊ (2009) ທີ່ໄດ້ ສຶກສາຄົ້ນຄວ້າວິໄຈກ່ຽວກັບ " ສຶກສາສະມັດຖະພາບພື້ນຖານການສອນຂອງຄູທີ່ຮຽນຈົບຈາກວິທະຍາໄລຄູປາກເຊ ໃນ 4 ແຂວງພາກໃຕ້ ສົກຮຽນ 2005-2006".

ຜົນການຄົ້ນຄວ້າວິໄຈພົບວ່າ: ສະມັດຖະພາບພື້ນຖານການສອນຂອງຄູສອນທີ່ຮຽນຈົບວິທະຍາໄລຄູປາກເຊ ໂດຍລວມແມ່ນນອນຢູ່ໃນ ການປະຕິບັດຫຼາຍ. ຖ້າແຍກຕາມແຕ່ລະສະມັດຖະພາບ ຢູ່ໃນລະດັບການປະຕິບັດຫຼາຍມີຢູ່ 7 ດ້ານຄື: ດ້ານການໃຊ້ອາຈາກິລິຍາທ່າທາງ, ດ້ານການຕັ້ງຄໍາຖາມ, ດ້ານການອະທິບາຍເລົ່າເລື່ອງ, ດ້ານການດຶງດູດຄວາມສົນໃຈ, ດ້ານການຈັດການຄຸ້ມຄອງຫ້ອງຮຽນ, ດ້ານການໃຫ້ກໍາລັງໃຈ ແລະ ດ້ານການປະເມີນຜົນການຮຽນ. ສ່ວນອີກ ສອງດ້ານຢູ່ໃນລະດັບປານກາງຄື: ດ້ານການໃຊ້ສື່ການສອນ ແລະ ດ້ານການສະຫຼຸບບົດຮຽນ.

## 6. ສະຫຼຸບຜົນ

ຜົນການວິໄຈກ່ຽວກັບສະມັດຖະພາບການສອນຂອງນັກສຶກສາ ສາຂາຄູພູມສາດ ທີ່ເຝິກຫັດການສອນຢູ່ໂຮງຮຽນມັດທະຍົມຕົ້ນສາທິດ ໃນ 9 ດ້ານ ພົບວ່າ: ສະມັດຖະພາບການສອນໂດຍລວມແມ່ນອນໃນເກນລະດັບການປະຕິບັດຫຼາຍ. ຖ້າຈໍາແນກແຕ່ລະດ້ານຂອງສະມັດຖະພາບການສອນຂອງນັກສຶກສາສາຂາຄູພູມສາດພົບວ່າ: ດ້ານທີ່ມີການປະຕິບັດຫຼາຍກວ່າໝູ່ແມ່ນດ້ານການເສີມກໍາລັງໃຈ, ຮອງລົງມາຕາມລໍາດັບທີ່ມີການປະຕິບັດຫຼາຍແມ່ນ ດ້ານການໃຊ້ຄໍາຖາມ, ດ້ານການຄວບຄຸມຫ້ອງ, ດ້ານການອະທິບາຍ ແລະ ເລົ່າເລື່ອງ, ດ້ານການກະຕຸ້ນຄວາມສົນໃຈ, ດ້ານການໃຊ້ອາຈາກິລິຍາທ່າທາງ, ດ້ານການສະຫຼຸບບົດຮຽນ ແລະ ດ້ານການປະເມີນ. ສ່ວນດ້ານການນໍາໃຊ້ສື່ການສອນ ແມ່ນມີການປະຕິບັດຢູ່ໃນປານກາງ.

## 7. ຂໍ້ຈໍາກັດຂອງການຄົ້ນຄ້ວາ

1.ເອກະສານປະກອບການຮຽນ-ການສອນໃນລະດັບຊັ້ນມັດທະຍົມສຶກສາຍັງມີຈໍາກັດ.

2.ສື່ທີ່ປະກອບເຂົ້າໃນການຮຽນ-ການສອນຂອງຄູ ແລະ ນັກຮຽນບໍ່ຫຼາກຫຼາຍ.

## 8. ຂໍ້ສະເໜີແນະ

1.ການວິໄຈກ່ຽວກັບສະມັດຖະພາບການສອນຂອງນັກສຶກສາຄູທີ່ເຝິກຫັດການສອນຄວນເຮັດຫຼາຍໂຮງຮຽນເພື່ອຮູ້ຂໍ້ມູນຫຼາຍຂຶ້ນ ແລະ ສາມາດພັດທະນາການຮຽນ-ການສອນໃນຄັ້ງຕໍ່ໄປໄດ້.

2.ການວິໄຈຄັ້ງຕໍ່ໄປຄວນລົງເລິກກ່ຽວກັບສະມັດຖະພາບການສອນໃນດ້ານການນໍາໃຊ້ສື່ເຂົ້າໃນການຮຽນ-ການສອນ.

## 9. ເອກະສານອ້າງອີງ


ກະຊວງສຶກສາທິການ. (2008). *ວິທີສອນວິທະຍາສາດສັງຄົມ1*. ກົມສ້າງຄູ. ສູນພັດທະຍາຄູ.

ກະຊວງສຶກສາທິການ. (2008). *ຫຼັກການສອນມັດທະຍົມຕົ້ນ 1*. ກົມສ້າງຄູ. ສູນພັດທະຍາຄູ.

ກະຊວງສຶກສາທິການ. (2009). *ວິທີສອນວິທະຍາສາດສັງຄົມ2*. ກົມສ້າງຄູ. ສູນພັດທະຍາຄູ.

ກະຊວງສຶກສາທິການ. (2009). *ວິທີສອນວິທະຍາສາດສັງຄົມ3*. ກົມສ້າງຄູ. ສູນພັດທະຍາຄູ.

ກະຊວງສຶກສາທິການ. (2009). *ການວັດ ແລະ ປະເມີນຜົນປີທີ 2*. ກົມສ້າງຄູ. ສູນພັດທະຍາຄູ.

ຄະນະສຶກສາສາດ. (2002). *ການບໍລິຫານ ໂຮງຮຽນມັດທະຍົມສໍາລັບ.*

ຄະນະອາຈານ ຄະນະຄຣຸສາດ. (2540). *ເອກະສານປະກອບການສອນວິຊາຫຼັກການສອນ.* ສະຖາບັນ ລາດສພັດ ອຸບົນລາດຊະທານີ.

ສະພາແຫ່ງຊາດ. (2007). *ກົດໝາຍວ່າດ້ວຍການສຶກສາສະບັບປັບປຸງໃໝ່.*

ສູນວິໄຈການສຶກສາ ແລະ ກິລາ. (2011). *ບົດລາຍງານ ການປະເມີນການຈັດຕັ້ງປະຕິບັດແຜນຍຸດທະສາດການປະຕິຮູບການສຶກສາແຫ່ງຊາດໄລຍະ 2.*

ວິທະຍາໄລຄູປາກເຊ. (2019). *ບົດລາຍງານການປະເມີນຕົນເອງ, ການປະກັນຄຸນນະພາບການສຶກສາ.*

ເພັດອຸດອນ ວົງລະຄອນ 2009. *ການວິໄຈເບື້ອງຕົ້ນ ມະຫາວິທະຍາໄລຈໍາປາສັກ.*

ທີມງານວິໄຈວິທະຍາໄລຄູປາກເຊ (2009). *ສຶກສາສະມັດທະພາບການສອນຂອງຄູທີ່ຮຽນຈົບຈາກວິທະຍາໄລຄູປາກເຊ ໃນ 4 ແຂວງພາກໃຕ້ ສົກຮຽນ 2005-2006*